ເມດິເຄດ ແລະ ການບໍລິການເບິ່ງແຍງ ດູແລຣະຍະຍາວ ສຳລັບຜູ້ໃຫຍ່

ການຂອກຮູ້:

- ວິທີການສຳລັບການຂໍເອົາ ແລະ ການຮັບເອົາເມດິເຄດ.
- ທາງເລືອກສຳລັບການເບິ່ງແຍງດູແລສຳລັບບຸກຄົນທີ່ໄດ້ຮັບເມດິເຄດ.

ຜູ້ນຳຣະດັບຊາດ

ທາງເລືອກ

ຄຸນນະພາບ

ການເບິ່ງແຍງດູແລ

ຂ່າວສານຈາກຜູ້ອຳນວຍການຂອງ...

ຜະແນກບໍຣິການຢູ່ຕາມເຮືອນ ແລະ ຊຸມນຸມຊົນ

ຖ້າຫາກว່າທ່ານໄດ້ຮັບປຶ້ມນ້ອຍຫົວນີ້, ແລ້ວທ່ານ (ຫລື ຄົນທີ່ທ່ານຮັກ) ກຳລັງຊອກຫາທາງເລືອກເພື່ອຈະໄດ້ຮັບຄວາມຊ່ວຍເຫລືອນຳການເບິ່ງແຍງດູແລຂອງທ່ານ. ອັນນີ້ແມ່ນສິ່ງທີ່ບໍ່ເຄີຍມີມາສຳລັບຫລາຍໆຄົນ ແລະ ທຸກໆຢ່າງອາດຈະຮູ້ສຶກว່າບໍ່ຄຸ້ນເຄີຍ ແລະ ສັບສົນ. ມັນສາມາດຍາກທີ່ຈະຮູ້ຈັກว່າການຊ່ວຍເຫລືອແນວໃດ ແຕ່ຈະມີຢູ່ ແລະ ຈະຈ່າຍຄ່າຂອງມັນແນວໃດ.

ຜະແນກ Home and Community Services ເປັນພາກສ່ວນນຶ່ງຂອງຣັດຖະບານຂອງຣັດທີ່ຄົນແກ່ຊຸາຣາ ແລະຜູ້ໃຫຍ່ທີ່ມີຣາຍໄດ້ຕ່ຳແລະຄອບຄົວຂອງເຂົາເຈົ້າຈະໄດ້ຣາຍຣະອຽດ,ການຊ້ຳມຊູແລະການບໍຣິການເມື່ອເວລາຕ້ອງການການປິ່ນປົວຣະຍະຍາວ.

ພວກເຮົາພູມໃຈว່າຣັດວໍຊິງຕັນໄດ້ຖືກຮັບຮູ້ว່າເປັນຜູ້ບຸກເບີກ ແລະ ຜູ້ນຳແຫ່ງຊາດໃນການຊ່ວຍເຫລືອຜູ້ໃຫຍ່ທຸກໆຄົນຜູ້ທີ່ຕ້ອງການການເບິ່ງແຍງດູແລໃຫ້ດຳເນີນທີ່ຈະດຳຣົງຊີວິດຢ່າງເປັນເອກຣາດຕໍ່ໄປເທົ່າທີ່ສາມາດເປັນໄປໄດ້ຢູ່ໃນສະຖານທີ່ເປັນເຮືອນ ຫລື ຊຸມນຸມຊົນ.

ອັນນີ້ຫມາຍຄວາມว່າແນວໃດສຳລັບທ່ານ? ທ່ານມີຫົນທາງ ແລະ ທາງເລືອກຫລາຍໆຢ່າງເພື່ອຈະໄດ້ຮັບການເບິ່ງແຍງດູແລທີ່ທ່ານຕ້ອງການ. ທ່ານບໍ່ແມ່ນມີແຕ່ຜູ້ດຽວເມື່ອທ່ານຮຽນຮູ້ກ່ຽວກັບว່າທາງເລືອກທາງໃດແດ່ທີ່ມີຢູ່ ແລະ ໄດ້ຮັບການບໍຣິການຕັ້ງຂຶ້ນ.

ພະນັກງານການເງິນ ແລະ ພະນັກງານສັງຄົມຂອງຜະແນກບໍຣິການຢູ່ຕາມເຮືອນ ແລະ ຊຸມນຸມຊົນເປັນນັກວິຊາການຜູ້ທີ່ຈະຊ່ວຍທ່ານໃຫ້ເຂົ້າໃຈທາງເລືອກເອົາຂອງທ່ານ ແລະ ທຽບຄວາມຕ້ອງການ ແລະ ຄວາມຊອບໃຈຂອງທ່ານໃສ່ການບໍຣິການທີ່ມີຄຸນນະພາບຢູ່ໃນຊຸມນຸມຊົນຂອງທ່ານ.

ຂ້າພະເຈົ້າຂໍຊັກຊວນໃຫ້ທ່ານຈິ່ງອ່ານປຶ້ມນ້ອຍຫົວນີ້ຫມົດ ແລະ ຖາມຄຳຖາມຕ່າງໆທີ່ທ່ານອາດຈະມີຢູ່ນຳ ພະນັກງານການເງິນ ຫລື ສັງຄົມຂອງທ່ານ. ຂ້າພະເຈົ້າຮູ້ຈັກว່າທ່ານຢູ່ໃນກຳມືທີ່ສາມາດຣັດໄດ້, ມີຄວາມຮູ້ທຸກຢ່າງ.

ດ້ວຍຄວາມຮັກແພງ,

Bea Rector

ຜູ້ອຳນວຍການ, ຜະແນກບໍຣິການຢູ່ຕາມເຮືອນ ແລະ ຊຸມນຸມຊົນ

ເມດິເຄດ
ແລະ
ການບໍຣິການເບິ່ງແຍງ
ດູແລຣະຍະຍາວ
ສຳລັບຜູ້ໃຫຍ່

ທ່ານມີທາງເລືອກ ທາງນຶ່ງ.

ປຶ້ມນ້ອຍຫົວນີ້ແມ່ນສຳລັບຜູ້ໃຫຍ່ທີ່ມີອາຍຸ 18 ປີ ຫລື ແກ່ກວ່າ ຜູ້ທີ່ມີບັນຫາສະພາບຊຳເຮື້ອ, ມີພະຍາດ, ຫລື ຄວາມເສັຽອົງຄະ , ຕ້ອງການໆຊ່ວຍເຫລືອໃນການປິ່ນປົວ, ແລະ ຄົ້ນຄົ້ວຫາໂດຍການໃຊ້ໂຄງການເມດິເຄດ ເພື່ອຊ່ວຍຈ່າຍຄ່າປິ່ນປົວ.

ປຶ້ມນ້ອຍຫົວນີ້ຈະຊ່ວຍທ່ານຮຽນຮູ້ເພີ່ມເຕີມ ກ່ຽວກັບ:

- ຈະຂໍເອົາບັດເມດິເຄດ້ໄດ້ຢ່າງໃດ.
- ກຳນົດຂອບເຂດເງື່ອນໄຂໄດ້ຮັບຂອງຣາຍໄດ້ ແລະ ຊັບສິນສຳລັບເມດິເຄດ້.
- ການກອບກູ້ເອົາຄືນຈາກຊັບສິນເຮືອນຊານສຳລັບເງິນ ທຶນຕ່າງໆທີ່ທ່ານໄດ້ຮັບ.
- ທາງເລືອກເອົາການບໍຣິການເບິ່ງແຍງດູແລຢູ່ໃນເຮືອນ ແລະ ບ່ອນຢູ່ອາໄສ ແລະ ແຫລ່ງບໍຣິການຖ້າຫາກວ່າທ່ານມີສິດໄດ້ຮັບເມດິເຄດ້.

ກົມ DSHS ຈະບໍ່ແບ່ງແຍກຊົນຊັ້ນວັນນະໃນການຮັບໃຊ້ ຫລື ການເຮັດສັນຍານຳພາ ຄົນບ້ອນຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ເພດ, ການປັບຕົວເຂົ້າສະພາບທາງເພດ, ອາຍຸ, ສາສນາ, ລັດທິ ຄວາມເຊື່ອຖື, ຖານະການແຕ່ງງານ, ຄວາມເສັຽອົງຄະ, ສະພາບນັກຮົບເກົ່າສະມັຍວຽດນາມ, ຫລື ການປາກົດຕົວຂອງ ສະພາບພິການທາງຮ່າງກາຍ, ຈິດໃຈ, ຫລື ຄວາມເສັຽອົງຄະ ດ້ານຄວາມຮູ້ສຶກ.

ຮູບພາບໂດຍ Carole Huff

ສາຣະບານ

ການຂໍເອົາເມດິເຄດ 1

ຈະຂໍເອົາຢ່າງໃດ 1

ການປະກອບໃບຄຳຮ້ອງ 1

ການທົບທວນຄືນເບິ່ງການເງິນ 2

ຂອບເຂດເງື່ອນไขได้ຮັບສຳລັບຣາຍได้ ແລະ ຊັບສິນ 3

ການປະເມີນເບິ່ງການເບິ່ງແຍງດູແລສ່ວນຕົວ 4

ສິ່ງທີ່ຄາດว่าจะเกิดขึ้นเมื่อคำร้องขอของท่านได้ถึกอะนุมัดแล้ว 5

ຣາຍได้ຂອງທ່ານເມື່ອເວລາທ່ານได้ຮັບເມດິເຄດ໌ແລ້ວ 6

ການກອບກູ້ເງິນທຶນຕ່າງໆຄືນจากมูนมํระถิกของท่าน 7

ການຜູກມັດກັມມะสิดใส่ซับสินที่ถิมเรือนอาน 8

ທາງເລືອກສຳລັບການເບິ່ງແຍງດູແລສຳລັບບຸກຄົນທີ່ได้ຮັບເມດິເຄດ 9

ການບໍລິການ ແລະ โคงการที่ช่วยท่านให้อาสัยอยู่ในเรือน 9

ການຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວ 9

ການຊ່ວຍເຫລືອນຳຄວາມຕ້ອງການນຳການປົ່ນປົວສຸຂະພາບ 11

ການບໍລິການອື່ນໆທີ່ສາມາດຊ່ວຍได้ 11

ໂຄງການເພີ້ມເຕີມ 13

ທາງເລືອກສຳລັບບ່ອນຢູ່ອາສັຍ ແລະ ການເບິ່ງແຍງດູແລ 13

ເຮືອນຄອບຄົວຜູ້ໃຫຍ່ ແລະ ສະຖານທີ່ອາສັຍຢູ່ທີ່ได้ຮັບຄວາມຊ່ວຍເຫລືອ 14

ສະຖານທີ່ເບິ່ງແຍງຜູ້ເຖົ້າ 14

ທ່ານມີທາງເລືອກເອົາ 15

ຣາຍຣະອຽດເພີ້ມເຕີມ 16

ການສັ່ງເອົາເອກສານພິມອອກມາ 16

ການຕິດຕໍ່ພົວພັນນຳການດຳຣົງຊີວິດຢູ່ຕາມຊຸມນຸມຊົນ 16

ແຫລ່ງຊ່ວຍເຫລືອສຳລັບຜູ້ໃຫ້ການເບິ່ງແຍງດູແລ 17

ການຂໍເອົາເມດິເຄດ

ເມດິເຄດແມ່ນໂຄງການປະກັນພັຍສຸຂະພາບຂອງລັດຖະບານທີ່ຈ່າຍຄ່າການບໍລິການຂະຍະຍາວຕ່າງໆ ສຳລັບບຸກຄົນແກ່ຄົນທີ່ມີຣາຍໄດ້ ແລະ ຊັບສິນຢູ່ໃນຂອບເຂດຈຳກັດທີ່ສຸດ.

ຖ້າທ່ານຫາກມີເງື່ອນໄຂໄດ້ຮັບ, ເມດິເຄດຈະຈ່າຍສຳລັບຄ່າບໍລິການຕ່າງໆໃນເຮືອນຂອງທ່ານເອງ ຫລື ຕາມສະຖານທີ່ເບິ່ງແຍງດູແລຢູ່ຕາມບັນພັກ (ເຮືອນແບບຄອບຄົວສຳລັບຜູ້ໃຫຍ່ ຫລື ສະຖານທີ່ດຳຣົງຊີວິດມີຄົນຊ່ວຍເຫລືອ) ຫລື ສະຖານທີ່ເບິ່ງແຍງຜູ້ເຖົ້າ.

ຈະຂໍເອົາໄດ້ຢ່າງໃດ

ຖ້າທ່ານຫາກว່າທ່ານມີອາຍຸ 18 ປີ ຫລື ແກ່ກว่า, ທ່ານສາມາດຂໍເອົາເມດິເຄດຜ່ານຫ້ອງການບໍລິການຢູ່ຕາມເຮືອນ ແລະ ຊຸມນຸມຊົນ (HCS) ຫລື ທາງອອນລາຍນ໌.

ມີສາມພາກສ່ວນໃຫຍ່ທີ່ສຳຄັນໃນວິທີການຂອງການຮ້ອງຂໍເອົາ:

1. ການຂຽນປະກອບ ແລະ ການຍື່ນໃບຄຳຮ້ອງເຂົ້າມາ.
2. ການທົບທວນເບິ່ງການເງິນເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບທາງດ້ານການເງິນຂອງທ່ານ.
3. ການປະເມີນຜົນເບິ່ງການເບິ່ງແຍງດູແລສ່ວນຕົວເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບສຳລັບການສິ່ງທີ່ທ່ານຣັດໄດ້ຂອງທ່ານ.

ຂໍເອົາໂດຍຕົນເອງ ຫລື ໂດຍທາງໄປສະນີ

ໂທຫາ ຫລື ແວ່ໄປຢັ້ຽມຢາມຫ້ອງການ HCS ເພື່ອຈະເອົາໃບຄຳຮ້ອງຂໍ. ເລກໂທຣະສັບສຳລັບຫ້ອງການ HCS ມີຢູ່ດ້ານຫລັງຂອງປຶ້ມນ້ອຍຫົວນີ້. ໃບຟອມຄຳ ຮ້ອງຂໍສາມາດຖືກ:

- ສົ່ງໄປໃຫ້ທ່ານ.
- ຈັບເອົາໄດ້ຢູ່ຫ້ອງການ HCS.
- ດາວໂຫລດ ແລະ ພິມອອກມາຈາກອິນເຕີແນດຢູ່ທີ່: http://www.hca.wa.gov/medicaid/forms/Pages/index.aspx ພາຍໄຕ 18-005 Washington Apple Health Application for Long-Term Care/Aged, Blind, Disabled coverage (ໃບຄຳຮ້ອງຂໍເອົາການຄຸ້ມກັນການເບິ່ງແຍງດູແລຂະຍະຍາວ, ອາຍຸແກ່, ຕາບອດ, ເສັ້ນອົງຄະຂອງ Washington Apple Health).

ຂໍເອົາທາງອອນລາຍນ໌

ເພື່ອຈະປະກອບ ແລະ ສົ່ງໃບຄຳຮ້ອງທາງອອນລາຍນ໌, ໄປທີ່ Washington Connections https://www.washingtonconnection.org/home/ ແລະ ບີບໃສ "Apply Now." ອັນນີ້ຈະພາທ່ານໄປຫາຫນ້າອິນເຕີແນດທີ່ປອດພັຍ. ຣາຍຣະອຽດທຸກໆຢ່າງທີ່ທ່ານຕົ້ເຂົ້າຢູ່ໃນ ໃບຄຳຮ້ອງຈະ ຖືກປ້ອງກັນ.

ການປະກອບໃບຄຳຮ້ອງ

ປະຕິບັດຕາມຄຳຊີ້ນຳ ແລະ ຕອບທຸກໆຄຳຖາມຢູ່ໃນໃບຄຳຮ້ອງ. ຖ້າຫາກว່າທ່ານຕ້ອງການຄວາມຊ່ວຍເຫລືອ ໃນການປະກອບໃບຄຳຮ້ອງ, ໂທຫາຫ້ອງການ HCS ທ້ອງຖິ່ນຂອງທ່ານ.

ຫ້ອງການ HCS ເປັນສ່ວນໜຶ່ງຂອງພະແນກການປົກ ຄອງຄົນຊຸຣາ ແລະ ການຊູ້ມຊູຣະຍະຍາວ (ALTSA), ພະແນກການປົກຄອງ ອັນນຶ່ງທີ່ຢູ່ພາຍໃນກົມສັງຄົມ ສິ່ງເຄາະ ແລະ ສາທາຣະນະສຸກ (DSHS).

ພະນັກງານຂອງຫ້ອງການ HCS ເອົາ ການບໍລິການ ແລະ ການຊູ້ມຊູໃຫ້ແກ່ທ່ານ.

ລາຍລະອຽດທີ່ທ່ານຈະຕ້ອງການທີ່ຈະເອົາໃຫ້ລວມເອົາ:

- ເລກຄວາມປອດພັຍຂອງສັງຄົມ.
- ຫລັກຖານຂອງບັດປະຈຳຕົວ.
- ຫລັກຖານຂອງລາຍໄດ້.
- ບັນທຶກຂອງຊັບສິນ (ເຊັ່ນว່າໃບແຈ້ງການຈາກທະນາຄານ, ໃບແຈ້ງການພາສີຕາດິນ, ປະກັນພັຍຊີວິດ).
- ເອກສານຂອງການເຂົ້າເມືອງ ຫລື ເອກສານສຳລັບຄົນຕ່າງດ້າວ.
- ຫລັກຖານຂອງການເປັນສັນຊາດຖ້າຫາກว່າທ່ານບໍ່ໄດ້ຮັບເມດິແຄຣ ຫລື ເງິນຄວາມປອດພັຍເພີ້ມເຕີມ (SSI), ຫລື ເງິນສະວັດດີການຄວາມເສັຽອົງຄະຄວາມປອດພັຍຂອງສັງຄົມ.

ການອູ້ມຊູຊ່ວຍເຫລືອເພີ້ມເຕີມ

ຖ້າທ່ານມີບັນຫາຫຍຸ້ງຍາກໃນການອ່ານໃບຄຳຮ້ອງ ຫລື ບັນຫາສຸຂະພາບຈິດ, ຮ່າງກາຍ, ການໄດ້ຍິນ, ຫລື ສາຍຕາທີ່ເຮັດໃຫ້ຍາກໃນການເຂົ້າໃຈເຖິງສິ່ງທີ່ເກີດຂຶ້ນໃນຊ່ວງການດຳເນີນການຂອງການຮ້ອງຂໍອັນນີ້, ໃຫ້ຂໍໃຫ້ພະນັກງານຂອງ HCS ຊ່ວຍ.

ພະນັກງານຂອງ HCS ອາດສາມາດຊ່ວຍທ່ານໃຫ້ໄດ້ຕົວໜັງສືນູນຕ່າງໆ, ເອກສານຕ່າງໆທີ່ແປພາສາອອກ ຫລືຢູ່ໃນຈາກຄອມພິວເຕີ້, ວັດຖຸທີ່ພິມໃຫຍ່, ການໃຊ້ຣະບົບເຄື່ອງຊ່ວຍຟັງສຽງ, ຣະບົບ TTY, ຫລື ນາຍພາສາທີ່ມີຄຸນສົມບັດ/ມີໃບປະກາດຢັ້ງຢືນ.

ຖ້າທ່ານຢາກໃຫ້ຄົນໃດຄົນນຶ່ງອີກຮ້ອງຂໍໃຫ້ທ່ານ, ທ່ານຕ້ອງໄດ້ເຊັນໃບມອບສັນທະເພື່ອອະນຸຍາດໃຫ້ຜູ້ອື່ນແທນຕົວໃຫ້ທ່ານໃນຣະຫວ່າງວິທີການຮ້ອງຂໍເອົາ. ໃບມອບສັນທະນັ້ນຕ້ອງໄດ້ປັບໃຫ້ຖືກກັບການເວລາໃນແຕ່ລະປີ.

ໃຫ້ໝັ້ນໃຈว່າບຸກຄົນຜູ້ນັ້ນຕ້ອງຕຽມພ້ອມທີ່ຈະຕອບຄຳຖາມຕ່າງໆກ່ຽວກັບເຣື່ອງສ່ວນຕົວ ແລະສະຖານະການໆເງິນຂອງທ່ານ.

ເພື່ອຣາຍລະອຽດເພີ້ມເຕີມກ່ຽວກັບວິທີການດຳເນີນການຮ້ອງຂໍສຳລັບການເບິ່ງແຍງດູແລระยะยาวสามาถถืกพิบเข้มได้ยู่ที่: http://www.hca.wa.gov/medicaid/manual/Pages/60-200.aspx.

ການທົບທວນຄືນເບິ່ງການເງິນ

ເມື່ອໃດທ່ານໄດ້ປະກອບຄຳຮ້ອງຂອງທ່ານສຳເຣັດແລ້ວ, ຜູ້ຊ່ຽວຊານດ້ານການເງິນຂອງ HCS ຈະເຣັດວຽກນຳທ່ານເພື່ອຈະເບິ່ງว່າທ່ານຈະມີເງື່ອນໄຂໄດ້ຮັບອິງຕາມການເງິນບໍ່ເພື່ອຈະໄດ້ຮັບເມດິເຄດ. ມັນຂຶ້ນກັບว່າແນວໃດຈະດີສຸດສຳຣັບທ່ານ, ນີ້ອາດຈະເປັນການສຳພາດໂດຍຕົນເອງ ຫລື ການສຳພາດທາງໂທຣະສັບ.

ເມື່ອທ່ານລົມກັບຜູ້ຊ່ຽວຊານດ້ານການເງິນ, ທ່ານຈະສາມາດອະທິບາຍຣາຍລະອຽດເພີ່ມເຕີມກໍ່ໄດ້ກ່ຽວກັບໃບຄຳຮ້ອງຂອງທ່ານ.

ກົດຣະບຽບຂອງ Washington Apple Health (Medicaid) ສາມາດຖືກພິບເຂ້ມໄດ້ຢູ່ທີ່: http://www.hca.wa.gov/medicaid/manual/Pages/index.aspx

ໃຫ້ເບິ່ງໃນພາກສ່ວນຕໍ່ໄປ "ຂອບເຂດເງື່ອນໄຂໄດ້ຮັບສຳລັບລາຍໄດ້ ແລະ ຊັບສິນ" ເພື່ອລາຍລະອຽດເພີ່ມເຕີມກ່ຽວກັບຂອບເຂດເງື່ອນໄຂໄດ້ຮັບສຳລັບລາຍໄດ້ ແລະ ຊັບສິນ ແລະ ການໂອນຊັບສິນຕ່າງໆ ຜູ້ຊ່ຽວຊານດ້ານການເງິນຈະທົບທວນຄືນນຳທ່ານ.

ພະນັກງານຂອງ HCS ສາມາດອະທິບາຍກົດລະບຽບຂອງເມດິເຄດ໌ໄດ້ແຕ່ບໍ່ສາມາດໃຫ້ຄຳແນະນຳໃນເຣື່ອງສ່ວນຕົວ, ການເງິນ, ຫລື ຄຳແນະນຳດ້ານກົດໝາຍ. ທ່ານຄວນຈະຕ້ອງການທີ່ຈະເວົ້ານຳທະນາຍຄວາມ ຜູ້ທີ່ເຂົ້າໃຈເຣື່ອງກົດລະບຽບເມດິເຄດ໌ຖ້າທ່ານຕ້ອງການຄວາມຊ່ວຍໃນການຕັດສິນໃຈ.

ພະນັກງານຢູ່ທີ່ຫ້ອງການຕິດແທດການດຳຣົງຊີວິດຢູ່ຕາມອຸມນຸມອິນທ້ອງຖິ່ນຂອງທ່ານສາມາດຊ່ວຍທ່ານຊອກຫາຄວາມຊ່ວຍເຫລືອທາງດ້ານກົດໝາຍໃຫ້ແກ່ທ່ານໄດ້. ໃຫ້ເບິ່ງໜັ້ນ 16 ວ່າຈະຕິດຕໍ່ຫາເພີ່ມໄດ້ແນວໃດ.

ທ່ານຕ້ອງໄດ້ແຈ້ງບອກຊັບສິນທຸກໆຢ່າງ ທີ່ທ່ານມີຢູ່ເມື່ອເວລາຂໍເອົາເມດິເຄດ໌.

ຂອບເຂດເງື່ອນໄຂໄດ້ຮັບສຳລັບລາຍໄດ້ ແລະ ຊັບສິນ

ທ່ານຕ້ອງເໝາະກັບເງື່ອນໄຂຂໍ້ຣຽກຮ້ອງກຳນົດລາຍໄດ້ແລະ ຊັບສິນຕ່າງໆຫລາຍແນວກ່ອນຈະມີເງື່ອນໄຂໄດ້ຮັບເມດິເຄດ໌. ຂອບເຂດກຳນົດລາຍໄດ້ ແລະ ຊັບສິນ ຕ່າງໆແມ່ນຖືກກຳຕັ້ງໂດຍກົດໝາຍ ແລະ ກໍ່ມີການປ່ຽນແປງແຕ່ລະປີ.

ກົດໝາຍຂອງຣັດຖະບານກາງກ່າວວ່າຂອງຂວັນ ຫລື ການໂອນກັມມະສິດບາງຢ່າງເພື່ອຈະມີເງື່ອນໄຂໄດ້ຮັບເມດິເຄດ໌ຈະຕ້ອງຖືກປັບໂທນລົງໂທດ. ກົດໝາຍຂອງຣັດຍັງບັນຈຸການປັບໂທນລົງໂທດອີກຄືກັນສຳລັບບຸກຄົນຜູ້ທີ່ຮັບເອົາຊັບສິນທີ່ຖືກໂອນໃຫ້ໃນມູນຄ່າຕ່ຳກວ່າມູນຄ່າຍຸຕິທັມຕາມທ້ອງຕະລາດ.

ລາຍໄດ້

ກຳນົດຂອບເຂດຂອງລາຍໄດ້ມີຄວາມແຕກຕ່າງກັນ ຂຶ້ງຂຶ້ນກັບການບໍຣິການຕ່າງໆທີ່ທ່ານຕ້ອງການ, ສະພາບການດຳຣົງຊີວິດຂອງທ່ານ, ແລະ ຖານະການແຕ່ງ ງານຂອງທ່ານ. ຫ້ອງການ HCS ຈະມີ ຣາຍລະອຽດປັດຈຸບັນໄວ້ໃຫ້. ມາດຕະຖານຂອງລາຍໄດ້ ແລະ ຊັບສິນຂອງເມດິເຄດ໌ຈະຖືກພົບເຫັນຢູ່ທີ່: http://www.hca.wa.gov/medicaid/eligibility/pages/standards.aspx.

ຊັບສິນ

ທ່ານຕ້ອງໄດ້ແຈ້ງບອກຊັບສິນທຸກໆຢ່າງທີ່ທ່ານມີຢູ່ໃນ ເວລາຂໍເອົາເມດິເຄດ໌. ຊັບສິນຕ່າງໆລວມເອົາເງິນ, ຊັບ ສິນຕ່າງໆ, ຊັບສິນບັດທີ່ທ່ານມີ ເຊັ່ນເງິນສົດ, ບັນຊີທະນາຄານຕ່າງໆ, ສະຕັອກ ແລະເງິນບອນຕ່າງໆ, ເງິນຈ່າຍປະຈຳປີ, ນະໂຍບາຍປະກັນພັຍຊີວິດ,ສັນຍາຊື້ ຂາຍ, ຍານພາຫນະ ຕ່າງໆ, ແລະທີ່ດິນ. ຖ້າທ່ານຫາກ ແຕ່ງງານ, ຊັບສິນຂອງຜົວເມັຽທັງສອງຄົນຈະຕ້ອງຖືກ ໃຊ້ເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບເມດິເຄດຂອງທ່ານ.

ຊັບສິນ "ທີ່ຖືກຍົກເວັ້ນ" ບາງຢ່າງຈະບໍ່ຖືກໄລ່ໃສ່ກຳນົດຂອບເຂດຂອງລາຍໄດ້. ຊັບສິນທີ່ຖືກຍົກເວັ້ນສາມາດ ລວມເອົາເຮືອນຂອງທ່ານ, ເຄື່ອງใຊ້ໃນບ້ານ ແລະ ຊັບສິນບັດສ່ວນຕົວຕ່າງໆ, ສັນຍາຊື້ຂາຍທີ່ດິນເຮືອນຊານ ບາງຢ່າງ, ຣົດຄັນດຽວ, ປະກັນພັຍຊີວິດທີ່ມູນ ຄ່າຕາມທີ່ອ້າງບໍ່ເກີນ $1,500, ຫລຸມຝັງສົບ, ແລະ ແຜນການຝັງສົບຈ່າຍກ່ອນລ່ວງຫນ້າ.

ການໂອນຊັບສິນ

ພາຍໄຕ້ກົດໝາຍຂອງຣັດແລະຂອງຣັດບານກາງ, ຜູ້ຊ່ຽວຊານບໍຣິການດ້ານການເງິນດ້ານ HCS ຕ້ອງ ທົບທວນຄືນເບິ່ງການໂອນຊັບສິນທຸກໆຢ່າງທີ່ເກີດຂຶ້ນພາຍໃນ 60 ເດືອນກ່ອນມື້ທີ່ທ່ານຂໍເອົາການບໍຣິການ ສະລະສິດຢູ່ສະຖານທີ່ປິ່ນປົວ ຫລື ຢູ່ຕາມເຮືອນ ແລະ ອຸມນຸມອິນ.

ຖ້າຫາກว່າຊັບສິນໄດ້ຖືກໂອນພາຍໃນຂອບເຂດເວລານີ້ ແລະ ທ່ານບໍ່ໄດ້ຮັບຣາຄາມູນຄ່າຍຸຕິທັມຕາມທ້ອງຕະຈາກສິ່ງເຫລົ່ານັ້ນ, ທ່ານອາດຈະບໍ່ມີເງື່ອນໄຂໄດ້ຮັບການບໍລິການດູແລຣະຍະຍາວຂອງເມດິເຄດ໌ໃນຊ່ວງຣະຍາເວລາໜຶ່ງ.

ທ່ານສາມາດໂອນເຮືອນຂອງທ່ານໂດຍບໍ່ຖືກການປັບໄໝລົງໂທດໄປໃຫ້:

- ພີວເມັ້ນ້ຂອງທ່ານ.
- ອ້າຍເອື້ອຍນ້ອງຄົງໆຜູ້ທີ່ມີຜົນກຳໄຣໃນເງິນໃນເຮືອນ ແລະ ໄດ້ອາສັຍຢູ່ທີ່ນັ້ນເປັນເວລາຢ່າງໜ້ອຍໜຶ່ງປີໃນທັນໃດກ່ອນວັນທີທີ່ມີເງື່ອນໄຂໄດ້ຮັບເມດິເຄດ໌.
- ລູກຫວ້ງເພິ່ງທີ່ມີອາຍຸຕ່ຳກວ່າ 21 ປີ.
- ລູກຜູ້ທີ່ຕາບອດ ຫລື ເສັ້ນ້ອິງຄະ.
- ລູກຜູ້ໃຫຍ່ທີ່ໄດ້ອາສັຍຢູ່ນຳທ່ານ ແລະ ໄດ້ໃຫ້ການເບິ່ງແຍງດູແລເພື່ອຈະເຮັດໃຫ້ທ່ານຍັງຢູ່ໃນເຮືອນຢູ່ຕໍ່ໄປເປັນເວລາສອງປີ.

ການປະເມີນເບິ່ງການເບິ່ງແຍງດູແລສ່ວນຕົວ

ພະນັກງານສັງຄົມຂອງພະແນກ HCS ຈະມາເຮືອນ ຂອງທ່ານ ແລະ ລົມນຳທ່ານເປັນເວລາດົນນານ. ການສົນທະນາອັນນີ້ຈະເຮັດໃຫ້ພະນັກງານສັງຄົມໄດ້ເຂົ້າໃຈ ແລະ ຕີຣາຄາວັດຜົນເຖິງສິ່ງທີ່ເກີດກັບທ່ານໃນຊີວິດປະຈຳວັນ ແລະ ຄວາມຊ່ວຍເຫລືອແນວໃດແດ່ທີ່ທ່ານຕ້ອງການ. ອັນນີ້ເອີ້ນວ່າການຕີຣາຄາປະເມີນຜົນ.

ການຕີຣາຄາວັດປະເມີນຜົນອັນນີ້ກໍ່ໄດ້ຖືກນຳໄປໃຊ້ໃນການພິຈາຣະນາເບິ່ງວ່າຖ້າຣະດັບຂອງການບໍລິການເບິ່ງແຍງດູແລຕ່າງໆທີ່ທ່ານຕ້ອງການຈະເຮັດໃຫ້ທ່ານມີເງື່ອນໄຂໄດ້ຮັບຕາມຄວາມສາມາດເຮັດໄດ້ເພື່ອຈະໄດ້ຮັບເມດິເຄດ໌ ຫລື ບໍ່.

ຖ້າທ່ານຫາກມີເງື່ອນໄຂໄດ້ຮັບເມດິເຄດ໌, ພະນັກງານສັງຄົມຈະທົບທວນເບິ່ງຄືນໃນທາງເລືອກຕ່າງໆ ຂອງ ທ່ານເພື່ອການບໍລິການເບິ່ງແຍງດູແລຕໍ່ທ່ານ. ໃຫ້ເບິ່ງໜັ້ນ 9-13 ເພື່ອທົບທວນເບິ່ງວ່າທາງເລືອກຕ່າງໆນັ້ນວ່າຈະເປັນແນວໃດ. ມັນຈະເປັນປະໂຍດຫລາຍທີ່ຈະອ່ານເບິ່ງພາກສ່ວນນີ້ກ່ອນທີ່ທ່ານຈະພົບກັບພະນັກງານສັງຄົມ.

ໃນຖານະເປັນພາກສ່ວນໜຶ່ງຂອງການປະເມີນຜົນ CARE ຂອງທ່ານ, ນາຍຫມໍສາມາດມີເວລາວ່າງທີ່ຈະຊ່ວຍປະເມີນຜົນເບິ່ງ ແລະ ວາງແຜນວ່າຄວາມ ຊ່ວຍເຫລືອແນວໃດແດ່ທີ່ທ່ານຈະຕ້ອງການນຳພາລະກິດການເບິ່ງແຍງດູແລສຸຂະພາບຈາກຜູ້ຊຳນານ. ອັນນີ້ອາດຈະແມ່ນການປຶກສາຣະຫວ່າງນາຍຫມໍ ແລະ ພະນັກງານສັງຄົມ, ຫລື ການປຶກສາໂທຫາ ຫລື ການ ຢັ້ຽມຢາມເຮືອນຣະຫວ່າງທ່ານເອງ ແລະ ນາຍຫມໍ.

ມີຫລາຍໆຄົນມີຄອບຄົວ ແລະ ຫມູ່ເພື່ອນເພື່ອຈະຊ່ວຍເຫລືອນຳການເບິ່ງແຍງດູແລຢູ່ແລ້ວ. ຕົວຢ່າງກໍ່ຄື, ຫລານຊາຍຂອງທ່ານອາດພາທ່ານໄປຊື້ຂອງຢູ່ຕລາດ, ລູກສາວຂອງທ່ານອາດຈະຊ່ວຍທ່ານຈ່າຍໃບບິນເກັບເງິນ, ແລະ ຫມູ່ອາດມາຮັບເອົາທ່ານໃນແຕ່ລະວັນອາທິດເພື່ອຈະໄປໂບດ.

ການປະເມີນຜົນ CARE ຂອງ ທ່ານຈະຊ່ວຍພິຈາຣະ ນາເບິ່ງວ່າທ່ານ ມີເງື່ອນໄຂໄດ້ຮັບຕາມຄວາມສາມາດ ເຮັດໄດ້ເພື່ອຈະໄດ້ຮັບເມດິເຄດ໌ ຫລື ບໍ່.

ຈົ່ງເວົ້ານຳຄອບຄົວ ແລະ ຫມູ່ເພື່ອນເຫລົ່ານີ້ ແລະ ຖາມເບິ່ງວ່າເຂົາເຈົ້າຈະດຳເນີນທີ່ຈະເຮັດສິ່ງເຫລົ່ານີ້ ໃຫ້ທ່ານຕໍ່ໄປ ຫລື ບໍ່ ກ່ອນທີ່ທ່ານຈະພົບກັບພະນັກງານສັງຄົມ.

ທ່ານຈະໄດ້ຮັບຈົດໝາຍບອກໃຫ້ທ່ານຮູ້ວ່າທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບການຄຸ້ມກັນເມດິເຄດ໌ຫລືບໍ່.

ສິ່ງທີ່ຄາດว่าจะเกิดขึ้นเมื่อคำร้องขอของท่านได้ถืกอะนุมัดแล้ว

ທ່ານຈະໄດ້ຮັບຫນັງສືບອກໃຫ້ທ່ານຮູ້ວ່າທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບການຄຸ້ມກັນເມດິເຄດ໌ແລ້ວ.

ຈົດໝາຍຈະບອກທ່ານວ່າທ່ານອາດຈະເກັບຮັກສາຣາຍໄດ້ຂອງທ່ານໄວ້ໄດ້ຫລາຍປານໃດສຳລັບຄວາມຕ້ອງການສ່ວນຕົວຂອງທ່ານ, ການຢູ້ມຢູ້ຜົວເມັຽ, ເງິນອະນຸມັດ ການຮັກສາດູແລບ້ານ, ຄ່າທຳນຽມປະກັນພັຍສຸຂະພາບ, ຄ່າໃຊ້ຈ່າຍຊື້ຢາທີ່ຈຳເປັນຊຶ່ງບໍ່ຖືກຄຸ້ມກັນໂດຍ ເມດິເຄດ, ແລະ ທ່ານຈະຕ້ອງໄດ້ຮ່ວມຈ່າຍຄ່າຜູ້ໃຫ້ ການບໍລິການຂອງທ່ານໃນການເບິ່ງແຍງດູແລຂອງທ່ານ (ການຈ່າຍຮ່ວມ).ໃຫ້ເບິ່ງພາກສ່ວນຕໍ່ໄປ, ຣາຍໄດ້ຂອງທ່ານ ໃນເມື່ອທ່ານຫາກໄດ້ຮັບເມດິເຄດ໌ແລ້ວ, ເພື່ອຣາຍຣະອຽດເພີ່ມເຕີມວ່າສິ່ງທັງໝົດນີ້ເປັນໄປແນວໃດ.

ໃຫ້ຕິດຕໍ່ຫາບຸກຄົນຜູ້ທີ່ສົ່ງຫນັງສືໄປຫາທ່ານຖ້າທ່ານມີຄຳຖາມແນວໃດກ່ຽວກັບແມ່ນຫຍັງແດ່ທີ່ກ່າວໄວ້ຢູ່ໃນຈົດໝາຍອະນຸມັດນັ້ນ.

ທ່ານຈະໄດ້ຮັບບັດບໍລິການ Provider One Services Card. It ມັນຈ່າຍສຳລັບ:

- ການປິ່ນປົວພະຍາບານທີ່ຖືກຄຸ້ມກັນໂດຍເມດິເຄດ໌ ເຊັ່ນການກວດຂອງຫ້ອງວິຈັຍ ຫລື ການພົບກັບທ່ານໝໍ.
- ຢາສັ່ງຊື້ຈາກທ່ານຫມໍຖ້າຫາກว่าท่าน ບໍ່ ໄດ້ຮັບເມດິ ແຄຣ໌ຢູ່. ເມດິແຄຣ໌ພາກ D ຈ່າຍສຳລັບຢາສັ່ງຊື້ຈາກທ່ານຫມໍຂອງທ່ານສ່ວນຫລາຍຖ້າຫາກว่าท่านกำลังได้รับเมดิแคร์ยู่.

ພະນັກງານສັງຄົມຈະຊ່ວຍທ່ານອອກແບບແຜນການເບິ່ງແຍງດູແລສ່ວນຕົວ. ແລ້ວຜູ້ນັ້ນກໍ່ຈະປະສານງານເຣື່ອງການດູແລປິ່ນປົວທີ່ຈຳເປັນຕ່າງໆຂອງທ່ານ.

ທ່ານຈະໄດ້ຮັບເອກະສານว่าด้วยสิดทิต่างๆพ้อมกับความรับผิดชอบ (Health Care Coverage and Responsibility form) (HCA 18-003) ທີ່ບອກເຖິງສິດທິ ແລະ ຄວາມຮັບຜິດຊອບຕ່າງໆຂອງທ່ານ ເມື່ອທ່ານໄດ້ຮັບເມດິເຄດ໌ແລ້ວ. ສຳເນົາຂອງ ເອກສານ HCA 18-003 ກໍ່ອາດຈະເບິ່ງໄດ້ຢູ່ທີ່: http://www.hca.wa.gov/medicaid/forms/Pages/index.

ເງື່ອນໄຂໄດ້ຮັບດ້ານການເງິນ ແລະ ຄວາມສາມາດເຮັດໄດ້ຂອງທ່ານທີ່ຈະໄດ້ຮັບການຊ່ວຍເຫລືອເມດິເຄດ໌ຈະໄດ້ຖືກທົບທວນຄືນເບິ່ງຢ່າງຫນ້ອຍປີລະເທື່ອ.

ເງື່ອນໄຂທີ່ຈະໄດ້ຮັບການຊ່ວຍເຫລືອເມດິເຄດ໌ຂອງທ່ານຈະຖືກທວບທວນເບິ່ງຄືນຢ່າງຫນ້ອຍປີນຶ່ງເທື່ອນຶ່ງ.

ຖ້າຫາກว่าท่านบ่ถืกอะนุมัดให้

ທ່ານຈະໄດ້ຮັບຫນັງສືບອກໃຫ້ທ່ານຮູ້ຈັກว่าใบคำร้องของท่านได้ถืกปะติเสดสำลับการคุ้มกันเมดิเคด์.

ມີແຫລ່ງບໍລິການ ແລະ ໂຄງການຊ່ວຍເຫລືອຫລາຍໆບ່ອນໃນຣາຄາຕ່ຳທີ່ທ່ານອາດຈະຄົ້ນຄວ້າເບິ່ງໄດ້. ໃຫ້ຕິດຕໍ່ກັບຫ້ອງການພົວພັນນຳການດຳຣົງຊີວິດຢູ່ໃນຊຸມນຸມຊົນຫ້ອງຖິ່ນຂອງທ່ານ. ໃຫ້ເບິ່ງ ໜ້າ 16 ເພື່ອຣາຍຣະອຽດເພີ່ມເຕີມ.

ລາຍໄດ້ຂອງທ່ານເມື່ອເວລາທ່ານໄດ້ຮັບເມດິເຄດ໌ແລ້ວ

ໃນເມື່ອທ່ານເລີ່ມຕົ້ນໄດ້ຮັບເມດິເຄດ໌ແລ້ວ, ທ່ານອາດຕ້ອງໄດ້ຊ່ວຍຈ່າຍເງິນລາຍໄດ້ບາງຢ່າງຂອງທ່ານໃສ່ຄ່າໃຊ້ຈ່າຍການປິ່ນປົວຂອງທ່ານ. ອັນນີ້ຖືກເອີ້ນວ່າການມີສ່ວນຮ່ວມຂອງທ່ານຈ. ຈຳນວນປະກອບສ່ວນຮ່ວມຈ່າຍຂອງທ່ານນັ້ນແມ່ນຂຶ້ນກັບການບໍລິການຕ່າງໆທີ່ທ່ານໄດ້ຮັບ, ຖານະການແຕ່ງງານຂອງທ່ານ, ແລະ ລາຍໄດ້ຂອງທ່ານ. ທ່ານຕ້ອງໄດ້ຈ່າຍຄ່າເຂົ້າຮ່ວມຖ້າຫາກວ່າມັນຖືກບົ່ງໃຫ້ຈ່າຍ.

ບາງສ່ວນຂອງລາຍໄດ້ທີ່ມີໄວ້ໃຫ້ຂອງທ່ານອາດນຳໄປໃຊ້ຈ່າຍເປັນສ່ວນແບ່ງໃຫ້ຜົວເມັຍ. ເງິນສ່ວນແບ່ງໃຫ້ຜົວເມັຍແມ່ນຖືກໃຊ້ເພື່ອຊັກຈູງເອົາລາຍໄດ້ຂອງຜົວເມັຍຂຶ້ນ ເພື່ອສ້າງຕັ້ງຣະດັບ ມາດຕະຖານຂອງຣັດຖະບານກາງ. ການໄດ້ຮັບເງິນສ່ວນແບ່ງຂອງຜົວເມັຍນັ້ນແມ່ນຂຶ້ນຢູ່ກັບໂຄງການ, ການບໍລິການຕ່າງໆທີ່ ທ່ານຕ້ອງການຈຳເປັນ, ແລະ ຖານະຄວາມເປັນຢູ່ຂອງທ່ານນຳ. ບາງສ່ວນຂອງລາຍໄດ້ຂອງທ່ານທີ່ມີໄວ້ໃຫ້ນັ້ນກໍ່ອາດເປັນສ່ວນລ້ຽງດູຍາດພີນ້ອງທີ່ຫວັງເພິ່ງ.

ຖ້າທ່ານອາສັຍຢູ່ໃນເຮືອນ, ສ່ວນນຶ່ງຂອງລາຍໄດ້ທີ່ມີໄວ້ໃຫ້ຂອງທ່ານສາມາດຖືກເກັບໄວ້ເປັນສ່ວນຂອງການໃຊ້ສອຍໃນເຮືອນ, ເຊັ່ນວ່າຄ່າເຊົ່າເຮືອນ, ຄ່ານ້ຳຄ່າໄຟ, ຄ່າພາສີ ແລະ ຄ່າຄວາມຕ້ອງການຈຳເປັນສ່ວນຕົວ.ຖ້າຫາກວ່າທ່ານອາສັຍຢູ່ໃນສະຖານທີ່ເບິ່ງແຍງດູແລຢູ່ບ່ອນຢູ່ອາສັຍ, ທ່ານກໍ່ເກັບຣາຍໄດ້ບາງສ່ວນຂອງທ່ານໄວ້ເພື່ອຄວາມຕ້ອງການສ່ວນຕົວຂອງທ່ານ.

ຖ້າຫາກວ່າທ່ານຈະຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າເປັນເວລາສັ້ນ, ທ່ານອາດສາມາດເກັບຣາຍໄດ້ເພີ່ມເຕີມເພື່ອຊ່ວຍການຮັກສາເຮືອນຂອງທ່ານສຳລັບການກັບຄືນເມືອເຮືອນຂອງທ່ານ. ອັນນີ້ເປັນທີ່ຮູ້ກັນ ວ່າ "ເງິນສ່ວນທີ່ຍົກເວັ້ນເພື່ອການບູຣະນະຮັກສາເຮືອນ". ທ່ານໝໍຂອງທ່ານຕ້ອງຢັ້ງຢືນໃຫ້ວ່າທ່ານຄິດຈະໄດ້ກັບເມືອຢູ່ເຮືອນຄືນ.

ຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນຄອບຄົວສຳລັບຜູ້ໃຫຍ່ ຫລື ສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍເຫລືອ, ທ່ານຈະຕ້ອງໄດ້ຮັບຜິດຊອບທີ່ຈະຈ່າຍຄ່າຫ້ອງ ແລະ ຄ່າກິນນອນ ເພີ້ມເຕີມໃສ່ການຈ່າຍຮ່ວມຂອງທ່ານ. ການປະສົມເຂົ້າ ກັນຂອງການຈ່າຍຮ່ວມ ແລະ ຄ່າຫ້ອງ ແລະ ການກິນນອນໄດ້ຖືກເອີ້ນວ່າຄວາມຮັບຜິດຊອບທັງຫມົດຂອງ ທ່ານ.

ນະໂຍບາຍການຈ່າຍເງິນເພີ້ມເຕີມ

ເມດິເຄດ໌ບວກກັບຈຳນວນເງິນທີ່ທ່ານຈ່າຍໃນການຈ່າຍຮ່ວມແມ່ນການຈ່າຍເງິນເຕັມຈຳນວນສຳລັບການປິ່ນປົວຂອງທ່ານ. ເຮືອນຄອບຄົວສຳລັບຜູ້ໃຫຍ່ (AFHs) ຫລື ສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍນຳ (ALFs) (ຈົ່ງເບິ່ງຫນ້າ 14) ອາດຈະຮ້ອງຂໍເອົາເງິນເພີ້ມເຕີມຈາກທ່ານອີກສຳລັບສິ່ງ **ທີ່ບໍ່ຖືກຄຸ້ມກັນຈ່າຍໃຫ້ໂດຍອັດຕຣາຂອງເມດິເຄດ໌.** ອັນນີ້ແມ່ນຕົວຢ່າງບາງອັນ.

- ທ່ານປາກໄດ້ຫ້ອງເປັນສ່ວນຕົວຢູ່ໃນເຮືອນທີ່ມີຫ້ອງເປັນສ່ວນຕົວເຄິ່ງນຶ່ງໄວ້ໃຫ້. ທ່ານຈະຕ້ອງໄດ້ຈ່າຍເງິນເພີ້ມເຕີມອີກໃຫ້ເຮືອນເພື່ອຈະໄດ້ຫ້ອງເປັນສ່ວນຕົວ.
- ທ່ານມັກສິ້ງສະລິບກັນຫົ່ວທີ່ມີຍີ່ຫໍ້ໂດ່ງດັງຫລາຍກວ່າແທນທີ່ວ່າຈະແມ່ນຍີ່ຫໍ້ທົ່ວໄປທີ່ເຮືອນຊື້ເອົາ. ທ່ານຈະຕ້ອງໄດ້ຈ່າຍເງິນຕື່ມອີກສຳລັບສິ້ງສະລິບກັນຫົ່ວທີ່ມີຍີ່ຫໍ້ໂດ່ງດັງ.

ກົດກຳນົດຂອງນະໂຍບາຍຂອງການຈ່າຍເງິນເພີ້ມເຕີມໄດ້ຖືກກ່າວໄວ້ຢູ່ໃນກົດບັນຍັດປົກຄອງຣັດວໍຊິງຕັນ (ຣະຫັດ) 388-105-0050 ແລະ 388-105-0055.

AFHs ຫລື ALFs ບ່ອນທີ່ເກັບເອົາເງິນເພີ້ມເຕີມສຳລັບສິ່ງຂອງທີ່ບໍ່ຖືກຄຸ້ມກັນຢູ່ໃນອັດຕາຂອງເມດິເຄດ ຈະຕ້ອງເອົາໃຫ້ທ່ານໃບໂກປີຂອງນະໂຍບາຍການຈ່າຍເງິນເພີ້ມເຕີມຂອງເຮົາເຈົ້າ ຊຶ່ງກ່າວເຖິງການຈ່າຍເງິນເພີ້ມເຕີມ.ຕິດຕໍ່ຫາຫນ່ວຍແກ້ໄຂການຮ້ອງທຸກ (RCS Complaint Resolution Unit) ໄດ້ທີ່ເລກ 1-800-562-6078 ຖ້າຫາກว่าหลังจากได้ทบทวนคืนเบิ่งนะโยบายการจ่ายเงินเพิ่มเติมแล้วท่านมีความอ้องใจหลือคำร้องทุก.

ການກອບກູ້ເງິນທຶນຕ່າງໆຄືນຈາກ ມູນມໍระกิกของท่าน

ตามกิดหมายแล้ว, รัดวอชิงตันอาดกอบกู้เอาเงิน คืน (ถูกจ่ายคืน) เงินที่รัดวอชิงตันจ่ายออกไปสำลับการบริการปื่นปิวเมดิเคด์ ແລະ ການປື່ນປົວระยะยาวที่ท่านได้รับก่อนการเสียชีวิดของท่าน. การจ่ายเงินจะถูกเอาออกจากมูนมํระกิกของท่าน (ยับสินที่ท่านได้ถือเป็นเจ้าของ หลื มีผินปะโยดบำ ในเวลาของการเสียชีวิด). อันนี้ถูกเอิ้นว่าการกอบกู้เอาจากมูนมํระกิก. รายระอะยดเพิ่มเติมก่ยวกับการกอบกู้เอาจากมูนมํระกิก, ลวมทั้งขะนิดของการบริการที่ต้องถูกกอบกู้เอาจากมูนมํระกิก, สามาดถูกพิบเซ้นยู่ที่: https://www.dshs.wa.gov/sites/default/files/FSA/forms/pdf/14-454.pdf ຫລື ການກອບກູ້ເອົາຈາກມູນມໍระกิกสำลับการบริการปื่นปิวพะยาบานที่ถูกจ่ายให้โดยรัดยู่ที่ www.washingtonlawhelp.org ((บิบใส่ "Seniors" ແລະ ແລ້ວ "Long term care assistance").

ເງິນທຶນສ່ວນຕົວຂອງຜູ້ອາສັຍຢູ່ໄດ້ຖືກກັກໄວ້ໂດຍສະຖານທີ່ອາສັຍ

ถ้าหากว่าสะถานที่เบิ่งแยงดูแลยู่บ่อนผักเอิ่าภักเอาเงินทึนส่วนติวต่างๆของผู้อาสัยยู่ผู้ที่เสียชีวิดแล้ว, เงินต้องถูกสิ่งให้พายใน 45 วันให้แก่:

- บุกคิน หลื สิดอำนาดพินัยกัมที่ปิกคองมูนมํระกิกของผู้อาสัยยู่. หลื
- ห้องการกอบกู้เอาเงินคืน. ห้องการแห่งนี้จะป่อยเงินออกเพื่อจะจ่ายค่าฝังสิบ.

ລັດວໍຊິງຕັນ ຈະກອບກູ້ເອົາຄ່າໃຊ້ຈ່ າຍໃນການປື່ນປົວระยะยาว ແລະ ການອູ້ມຊູທີ່ຖືກອອກທຶນໃຫ້ໂດຍລັດຖະບານກາງ ຫລື ລັດຍົກເວັ້ນເສັ້ນແຕ່:

- ການບໍລິການປ້ອງກັນຜູ້ໃຫຍ່
- ເງິນຈ່ າຍຄວາມປອດພັຍເພີ້ມເຕີມທີ່ຖືກອະນຸມັດໂດຍຜະແນກປົກຄອງຄວາມເສັ້ນອົງຄະດ້ານການຈະເຣີນເຕີບໂຕ (DDA)
- ການບໍລິການຂອງໂຄງການຄວາມປອດພັຍຂອງອຸມນຸມອິນໃນການເຂ້ ົ້ ານ

าคืนของผู้กะทำผิด
- ການບໍລິການອາສາສະມັກ
- ເງິນຈ່ ານຮ່ ວມ ແລະ ຄ່ �ำນຽມທີ່ກ່ ຽວພັນນ

ำເມດິແຄຣ ์ພ ายใต้ ้ ใ ดงการปะปักเงินเมดิแคร์ของรัดถะบานกาง
- ຄ່

ปื่นปิวพะยาบานที่ Health Care Authority ຈ ่ ายถ้ าหากว่ าท่ านบ่ ่ ได้ รับการบริการ ແລະ ການອູ້ ມ ຊ ູ ສ ำ ລ ັ ບ ການ ປ ື ່ ນ ປ ົ ວ ระยะยาวอีก.

ຈົ່ ງ ອ ່ ານ "Estate Recovery for Medical Services Paid for by the State" (ການ ກ ອ ບ ກ ູ ້ ເ ອ ົ າ ຈ າ ກ ມ ູ ນ ມ ໍ ระ ก ิ ก ส ำ ล ั บ ก า ร ป ื ่ น ป ิ ว พ ะ ย า บ า น ท ี ่ ถ ู ก จ ่ า ย ให้ โ ด ย ร ั ด) ได้ ท ี ่ www.washingtonlawhelp.org (ບິ ບ ໃ ສ ່ "Seniors" ແ ລ ະ ແ ລ ້ ວ "Long term care assistance"):

- ອ ่ ານ ກ ິ ດ ບ ັ ນ ຍ ັ ດ ທ ี ่ ถ ู ก ด ั ด ແ ປ ງ ຂ ອ ງ ລ ັ ດ ວ ໍ ຊ ິ ງ ຕ ັ ນ (RCW) 41.05a ແ ລ ະ 43.20b ແ ລ ະ ກ ິ ດ ບ ັ ນ ຍ ັ ດ ປ ິ ກ ຄ ອ ງ ລ ັ ດ ວ ໍ ຊ ິ ງ ຕ ັ ນ (WAC) 182-527.

ການ ກ ອ ບ ກ ູ ້ ເ ອ ົ າ ຈ າ ກ ມ ູ ນ ມ ໍ ระ ก ิ ก ພ ຽ ງ ແ ຕ ່ ใ ช้ ได้ กับ ยับ สิน ต่ า งๆ ที่ ท่ า น เป็ น เจ้ า ของ ຫ ລ ື ມ ີ ผ ิ น ก ำ ไ ร ນ ำ ใ ນ ເ ວ ລ າ ຂ ອ ງ ການ ເ ສ ັ ້ ນ ຊ ີ ວ ິ ດ. ທ າ ງ ລ ັ ດ ຈ ະ ບ ໍ ่ ລ ິ ้ ມ ต ิ ้ ม ค ว า ม พ ะ ย า ย า ม ท ี ่ จ ะ ก อ บ กู ้ จ ิ ม ก ว ่ า พ า ย ห ลั ง ก า ร เ ส ี ย ช ี ว ิ ด ของท่าน, ในอ่วงการมีชีวิดยู่ของผิวเมียของท่าน, ຫ ລ ື ໃ ນ ອ ່ ວ ງ ເ ວ ລ າ ທ ີ ่ ລ ູ ກ ຂ ອ ງ ທ ່ า น ห า ก ม ี อ า ยุ ต ่ า ก ว ่ า

21 ປີ, ຕາບອດ ຫລື ເສັ້ນອົງຄະ. ເງື່ອນໄຂ ຂອງຄວາມຫຍຸ້ງຍາກລໍາບາກໃນການປົກປ້ອງມູນມໍระ ດົກຂອງຜູ້ເພົ່າພາອາດນໍາມາໃຊ້.

ທີ່ດິນບາງບ່ອນທີ່ເປັນເຈົ້າຂອງໂດຍຄົນອະເມຣິກັນອິນດຽນ ຫລືຄົນອາລາສກາດັ້ງເດີມອາດ ຈະຖືກຍົນເວັ້ນ ຈາກການກອບກູ້ເອົາຈາກມູນມໍระດົກ.

ການຍົກເວັ້ນຫລາຍຢ່າງໄດ້ມີມາເປັນຕັ້ງຫລາຍປີແລ້ວ. ກົມ DSHS ຈະໃຊ້ກົດໝາຍ ການກອບກູ້ເອົາຈາກມູນ ມໍระດົກບໍ່ວ່າກົດໝາຍອັນໃດທີ່ມີຢູ່ໃນວັນທີ່ທີ່ການຊ່ວຍ ເຫລືອໄດ້ຮັບ.

ການຜູກມັດກັມມະສິດໃສ່ຊັບສິນ ທີ່ດິນເຮືອນຊານ

ກົມ DSHS ອາດຈະຍື່ນການຜູກມັດກັມມະສິດໃສ່ຊັບສິນທີ່ດິນເຮືອນຊານຕ່າງໆເພື່ອຈະຈ່າຍຄືນຄ່າ ການເບິ່ງແຍງດູແລระยะยาว ແລະ ການບໍລິການປິ່ນປົວຕ່າງໆທີ່ທ່ານໄດ້ຮັບຖ້າຫາກว่า:

- ຊັບສິນບັດເປັນສ່ວນນຶ່ງຂອງມູນມໍระດົກຂອງທ່ານ ແລະ ທ່ານໄດ້ເສັ້ນຊີວິດລົງໄປແລ້ວ.
- ທ່ານໄດ້ພັກອາສັຍຢູ່ຖາວອນໃນເຮືອນເບິ່ງແຍງດູແລຜູ້ເຖົ້າ ຫລື ສະຖານທີ່ພະຍາບານບ່ອນອື່ນ.

ກ່ອນການຍື່ນການຜູກມັດກັມມະສິດໃສ່ຊັບສິນທີ່ດິນໃຫ້ເປັນສ່ວນນຶ່ງຂອງການກອບກູ້ເອົາຈາກມູນມໍระດົກ, ກົມ DSHS ຈະໃຫ້ຄໍາແຈ້ງການ ແລະ ໂອກາດສໍາລັບການຟັງເຣື່ອງໃຫ້ແກ່ຜູ້ຕາງຫນ້າສ່ວນຕົວຂອງ ມູນມໍระດົກຂອງທ່ານ ຫລື ເຈົ້າຂອງຊັບສິນທີ່ດິນອື່ນໆທີ່ຖືກສ້າງຕັ້ງຖານະເປັນເຈົ້າຂອງຊັບສິນ.

ຖ້າຫາກว่าທ່ານອາສັຍຢູ່ໃນເຮືອນເບິ່ງແຍງດູແລຜູ້ເຖົ້າ ຫລື ສະຖານທີ່ພະຍາບານບ່ອນອື່ນ ແລະ ໄດ້ຮັບເມ ດິເຄດ, ກົມ DSHS ອາດຈະກອບກູ້ເອົາຄ່າໃຊ້ຈ່າຍຄືນຈາກມູນມໍระດົກຂອງທ່ານ ຫລື ການຂາຍຊັບ ສິນເຮືອນຊານຂອງທ່ານ. ຖ້າຫາກว่าທ່ານກັບຄືນມາ ເຮືອນ, ການຜູກມັດກັມມະສິດຈະຖືກປົດປ່ອຍອອກ. ການຜູກມັດກັມມະສິດຈະບໍ່ຖືກຍື່ນໃສ່ເຮືອນຂອງທ່ານຖ້າຫາກว่า:

- ພີວເມັຽ, ຂາຄູ່ຢູ່ນໍາກັນ, ຫລື ລູກທີ່ບໍ່ພົ້ນກະສຽນ, ຜູ້ຕາບອດ, ຫລືເປັນພິການຂອງທ່ານຫາກ ອາສັຍຢູ່ໃນເຮືອນ.
- ອ້າຍເອື້ອຍນ້ອງຄົງໆມີຜົນກໍາໄຮສະເໝີພາບກັນໃນເຮືອນນັ້ນ, ປັດຈຸບັນກໍ່ຍັງອາສັຍຢູ່ໃນເຮືອນນັ້ນ, ແລະ ໄດ້ອາສັຍຢູ່ທີ່ນັ້ນຢ່າງໜ້ອຍເປັນເວລາປີນຶ່ງໂດຍທັນທີກ່ອນເວລາທີ່ທ່ານຍ້າຍເຂົ້າຢູ່ສະຖານທີ່ປິ່ນປົວ.

ເພື່ອຮາຍລະອຽດເພີ້ມເຕີມກ່ຽວກັບເຣື່ອງການກອບກູ້ເອົາຈາກມໍระດົກ, ຈົ່ງປຶກສາທະນາຜູ້ມີຄວາມຊໍາ ນານກ່ຽວກັບກົດໝາຍເມດິເຄດ. ທ່ານກໍ່ຍັງສາມາດຕິດຕໍ່ກັບຫ້ອງການສຶກສາປະສານງານດ້ານກົດໝາຍ, Coordinated Legal Education, Advice, and Referral (CLEAR) ເລກໂທຟຣີໄດ້ທີ່ 1-888-201-1014.

CLEAR ເປັນໂຄງການຂອງ Northwest Justice Project – ອົງການທົ່ວຣັດທີ່ບໍ່ຫວັງ ຜົນກໍາໄຮຊึ่ງໃຫ້ ການບໍລິການຟຣີດ້ານກົດຫມາຍພົລເມືອງໃຫ້ແກ່ພົລເມືອງຂອງຣັດວໍຊິງຕັນທີ່ມີຣາຍໄດ້ຕໍ່າ. ເຂົາເຈົ້າມີແວບໄຊທ໌ເປັນພາສາອັງກິດ ແລະ ສະເປນິຊ ທີ່ www.nwjustice.org.

ທາງເລືອກສຳລັບການເບິ່ງແຍງດູແລ ສຳລັບບຸກຄົນທີ່ໄດ້ຮັບເມດິເຄດ໌

ພະນັກງານສັງຄົມຂອງຫ້ອງການ HCS ,ບາງເທື່ອຖືກ ເອີ້ນວ່າເປັນຜູ້ຈັດການເອກສານ, ຈະທົບທວນ ເບິ່ງທາງເລືອກຂອງການເບິ່ງແຍງດູແລຂອງທ່ານກັບທ່ານຄືນ ພາຍຫລັງການຕົກລົງການເບິ່ງແຍງ ດູແລ CARE ຂອງທ່ານແລ້ວ (ໃຫ້ເບິ່ງໜ້າ 4).

ໜ້າຕໍ່ລິງໄປນີ້ແມ່ນສະລຸບຄວາມຂອງທາງເລືອກຂອງການເບິ່ງແຍງດູແລຫລາຍໆທາງທີ່ທ່ານຈະເວົ້າລົມ ກັນໄດ້. ພະນັກງານສັງຄົມຂອງທ່ານຈະມີຣາຍລະອຽດເພີ້ມເຕີມ ແລະ ຈະຕອບຄຳຖາມຕ່າງໆທີ່ທ່ານອາດ ຈະມີຢູ່ກ່ຽວກັບທາງເລືອກເຫລົ່ານີ້, ເງື່ອນໄຂໄດ້ຮັບທາງເລືອກຂອງທ່ານ, ແລະ ເວົ້າມຳທ່ານວ່າແມ່ນ ຫຍັງ ທີ່ທ່ານຄິດວ່າຈະເຮັດໄດ້ດີທີ່ສຸດ.

ມີການບໍລິການຫລາຍໆຢ່າງ, ຫລາຍໂຄງການ, ແລະ ແຫລ່ງຊ່ວຍເຫລືອຕ່າງໆທີ່ມີ ໃຫ້ເພື່ອຊ່ວຍທ່ານໃຫ້ສືບຕໍ່ທີ່ ຈະອາສັຍຢູ່ເຮືອນຕໍ່ໄປ.

ການບໍລິການ ແລະ ໂຄງການທີ່ຊ່ວຍທ່ານໃຫ້ອາສັຍຢູ່ໃນເຮືອນ

ຫລາຍໆຄົນສາມາດສືບຕໍ່ທີ່ຈະອາສັຍຢູ່ເຮືອນຖ້າຫາກว່າເຂົາເຈົ້າມີການຊ່ວຍເຫລືອນຳໜ້າທີ່ເຊັ່ນว່າການຈັດ ແຈງອາຫານ, ການບົວຣະບັດຕົນເອງ, ຫລື ການມັຄນເຮືອນ. ມັນມີການບໍລິການຫລາຍໆຢ່າງ, ໂຄງການ, ແລະ ແຫລ່ງຊ່ວຍເຫລືອມີໄວ້ໃຫ້ເພື່ອຈະຊ່ວຍເຫລືອທ່ານໃນເຣື່ອງນີ້.

ສ່ວນຫລາຍແລ້ວ, ຄອບຄົວ ແລະ ຫມູ່ເພື່ອນໄດ້ຊ່ວຍເຫລືອທ່ານຢູ່ແລ້ວ ແລະ ຈະດຳເນີນເຣັດຕໍ່ໄປ. ພະນັກ ງານສັງຄົມຂອງທ່ານຈະເຣັດວຽກນຳທ່ານ ແລະ ຈະອອກແບບແຜນການເບິ່ງແຍງດູແລເພື່ອຈະຕົ້ມ ໃສ່ບ່ອນว່າງທີ່ຕ້ອງມີການຊ່ວຍເຫລືອເພີ້ມເຕີມ.

ການຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວ

ການຕ້ອງການຄວາມຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວຫມາຍຄວາມว່າທ່ານຕ້ອງການຄວາມຊ່ວຍ ເຫລືອນຳວຽກງານເຊັ່ນว່າການອາບນ້ຳ, ການນຸ່ງເຄື່ອງ, ຫລື ການໃຊ້ຫ້ອງນ້ຳ. ໂຄງການເຊັ່ນว່າໂຄງການ ທາງເລືອກທຳອິດຂອງຊຸມນຸມອິນ (ຳ່ໂມນຸນິທຍ ຟີຣຊຫ ຳ່ຣໂຈດ) (CFC) ຫລື ການເບິ່ງແຍງດູແລສ່ວນຕົວ ຂອງເມດິແຄດ໌ ເດີຈາດ ຳ່ເຣຊໂນາລ ຳ່ານຣ (MPC) ຈະຈ່າຍເງິນໃຫ້ສຳລັບການເບິ່ງແຍງດູແລສ່ວນຕົວ.

ຜູ້ໃຫ້ການເບິ່ງແຍງດູແລສາມາດຖືກຈ້າງເພື່ອຈະຊ່ວຍເຫລືອທ່ານນຳການເບິ່ງແຍງດູແລສ່ວນຕົວຖ້າຫາກว່າ ທ່ານສອດຄ່ອງນຳກົດກຳນົດຂອງເງື່ອນໄຂໄດ້ຮັບ. ໂດຍອີ້ນກັບຣາຍໄດ້ຂອງທ່ານ, ກົມ DSHS ຈະຈ່າຍເງິນ ໃຫ້ສຳລັບທັງຫມົດ ຫລືສ່ວນນຶ່ງຂອງການບໍລິການຂອງຜູ້ເບິ່ງແຍງດູແລເຫລົ່ານີ້ (ຈົ່ງເບິ່ງຫນ້າ 6 ເພື່ອຣາ ຍລະອຽດເພີ້ມເຕີມ). ກົມ DSHS ຍັງຈະຈ່າຍເງິນໃຫ້ອີກສຳລັບການຝຶກອົບຮົມຂອງຜູ້ໃຫ້ການເບິ່ງແຍງ ດູແລພື້ນຖານສຳລັບຜູ້ເບິ່ງແຍງດູແລຜູ້ມີຄຸນນະວຸດທິທຸກໆຄົນທີ່ຖືກຈ້າງ.

ມັນເປັນທາງເລືອກຂອງທ່ານว່າແມ່ນໃຜຈະເປັນຜູ້ເບິ່ງແຍງດູແລຂອງທ່ານ. ທ່ານສາມາດຊອກຫາຜູ້ເບິ່ງແຍງ ດູແລໂດຍຕົນເອງ, ຊຶ່ງຖືກເອີ້ນວ່າຜູ້ໃຫ້ການບໍລິການສ່ວນບຸກຄົນ (IP), ຫລື ຊອກຫາຄົນນຶ່ງໂດຍຜ່ານຫ້ອງ ການເບິ່ງແຍງດູແລຢູ່ຕາມເຮືອນ ຫລື ການປະສົມກັນທັງສອງຢ່າງ. ຖ້າຫາກว່າທ່ານຕ້ອງການຢາກໃຫ້ສະມາ ຊິກຄອບຄົວເປັນຜູ້ເບິ່ງແຍງດູແລຂອງທ່ານ, ເຂົາເຈົ້າສາມາດຖືກຈ້າງໃຫ້ເປັນໄດ້ແຕ່ IP ເທົ່ານັ້ນ. ພະນັກງານ ສັງຄົມຂອງທ່ານສາມາດຊ່ວຍເຫລືອທ່ານໄດ້ນຳການດຳເນີນການອັນນີ້.

ມັນເປັນທາງເລືອກຂອງທ່ານว່າໃຜຈະເປັນ ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານ.

ຜູ້ໃຫ້ການບໍລິການສ່ວນບຸກຄົນ (IP)

ໂດຍມີ IP ຄົນນຶ່ງ, ທ່ານຈະຕັດສິນໃຈວ່າແມ່ນໃຜຈະມາເຮືອນຂອງທ່ານ ແລະ ເອົາການເບິ່ງແຍງດູແລໃຫ້ທ່ານ. ທ່ານຈະຕັ້ງຕາຕະລາງການເຮັດວຽກຂອງຜູ້ໃຫ້ການເບິ່ງແຍງດູແລຂອງທ່ານ ແລະ ບົ່ງບອກວ່າຈະເຮັດພາລະກິດແນວໃດ ແລະ ໃນເວລາໃດ.

ທ່ານເປັນນາຍจ้างຂອງ IP ຄົນນັ້ນ. ອັນນີ້ຫມາຍຄວາມວ່າທ່ານເລືອກເອົາ, ຈ້างເອົາ, ແລະ ກຳກັບຄວບຄຸມຜູ້ໃຫ້ການເບິ່ງແຍງດູແລ. ທ່ານຍັງຈະຕ້ອງໄດ້ຊອກຫາຜູ້ໃຫ້ການເບິ່ງແຍງສຳລອງອີກເມື່ອເວລາ IP ປົກກະຕິຂອງທ່ານມີມື້ພັກ. ເພື່ອຈະຊອກຫາ IP ຄົນນຶ່ງ, ທ່ານສາມາດ:

- ເລືອກເອົາໝູ່ຄູ່ ຫລື ສະມາຊິກຄອບຄົວ (ໂດຍມີຂໍ້ຍົກເວັ້ນບາງຢ່າງ).
- ໃຊ້ບັນຊີທະບຽນນຳສິ່ງການເບິ່ງແຍງດູແລຢູ່ເຮືອນ (ເບິ່ງຢູ່ລຸ່ມນີ້).
- ໃຫ້ຊອກຫາຜູ້ໃດຜູ້ຫນຶ່ງໃນຊຸມນຸມຊົນຂອງທ່ານ.

ກົມ DSHS ຈະທຳການກວດເບິ່ງເບື້ອງຫລັງໃສ່ທຸກໆຄົນທີ່ທ່ານເລືອກເອົາ.

ເພື່ອຄວາມເຂົ້າໃຈອັນຖ້ວນຖີ່ເພີ້ມເຕີມອີກໃນຄວາມຮັບຜິດຊອບຂອງນາຍจ้างຂອງທ່ານ, ຈົ່ງອ່ານໃຫ້ຫມົດ "Acknowledgement of My Responsibilities as the Employer of My Individual Provider" (DSHS 11-055). ອັນນີ້ແມ່ນໃບຟອມທີ່ທ່ານຈະໄດ້ຮັບຈາກຜູ້ຈັດການເວກສານຂອງທ່ານ.

ຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນ

ທາງເລືອກທາງອື່ນຂອງທ່ານແມ່ນເພື່ອຈະເລືອກເອົາຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນທີ່ມີໃບອະນຸຍາດ ແລະ ມີສັນຍາທີ່ຈະເອົາຜູ້ເບິ່ງແຍງດູແລໃຫ້. ອົງການເບິ່ງແຍງດູແລຢູ່ຕາມເຮືອນເກນເອົາ, ກວດເບິ່ງເບື້ອງຫລັງໂດຍຜ່ານກົມ DSHS, ຈ້างເອົາ, ແລະ ກຳກັບຄວບຄຸມຄົນງານຂອງເຂົາເຈົ້າ ແລະ ໃຫ້ແນ່ໃຈວ່າຜູ້ໃຫ້ການເບິ່ງແຍງດູແລໄດ້ຮັບການຝຶກອົບຮົມທີ່ຕ້ອງມີ. ຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນຈະເອົາຜູ້ເບິ່ງແຍງດູແລສຳລອງໃຫ້ທ່ານຖ້າຫາກว่าผู้เบิ่งแยงดูแลที่ถืกนัดใช้มาบ่สามาถมาเรัดวยกได้.

ຜູ້ຄວບຄຸມງານຂອງຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນຈະເຮັດວຽກນຳທ່ານເພື່ອຈະຊອກຫາຜູ້ເບິ່ງແຍງດູແລທີ່ຕອບສະນອງຄວາມຕ້ອງການຂອງທ່ານໄດ້ດີທີ່ສຸດ. ເຖິງຢ່າງໃດກໍຕາມ, ທ່ານມີການຄວບຄຸມໄດ້ຫນ້ອຍກວ່າว่าแม่นใผถืกเลือกเอิา และ ท่านจะบ่ได้ผู้เบิ่งแยงดูแลถืนถรวกันมาเรือนของท่านในแต่ละเที่อ. ຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນບໍ່ຖືກອະນຸຍາດໃຫ້ຈ້างເອົາສະມາຊິກຄອບຄົວຂອງທ່ານຄົນໃດຄົນນຶ່ງເພື່ອຈະໃຫ້ການເບິ່ງແຍງດູແລຂອງທ່ານ.

ບັນຊີທະບຽນການແນະນຳສຳລັບການເບິ່ງແຍງດູແລຢູ່ເຮືອນຂອງຣັດວໍຊິງຕັນ

ບັນຊີທະບຽນການແນະນຳສຳລັບການເບິ່ງແຍງດູແລຢູ່ເຮືອນຂອງຣັດວໍຊິງຕັນແມ່ນການບໍລິການແນະນຳ ຟຣີ ຊຶ່ງທຽບທ່ານໃສ່ກັບ IP ຜູ້ທີ່ຖືກຄັດເລືອກມາກ່ອນລ່ວງຫນ້າແລ້ວຢູ່ໃນເຂດຂອງທ່ານ. ທ່ານສາມາດໃຊ້ບັນຊີທະບຽນການແນະນຳສຳລັບການເບິ່ງແຍງດູແລຢູ່ເຮືອນເພື່ອຊ່ວຍເຫລືອໃນການຊອກຫາ IP ຄົນນຶ່ງ ຫລື ຜູ້ເບິ່ງແຍງດູແລສຳລອງ.

ມັນມີສູນກາງບັນຊີທະບຽນການແນະນຳຢູ່ໃນຫລາຍໆຊຸມນຸມຊົນຢູ່ໃນຣັດວໍຊິງຕັນ. ເພື່ອຈະເບິ່ງວ່າຈະມີສູນກາງບັນຊີທະບຽນການແນະນຳຢູ່ໃກ້ບ້ານທ່ານ ຫລື ບໍ່, ຈົ່ງ ໂທຫາ 800-970-5456 ຫລື ແວ່ເຂົ້າຢ້ຽມແວບໄຊທ໌ຂອງເຂົາເຈົ້າທີ່ www.hcrr.wa.gov ເພື່ອຣາຍຣະອຽດເພີ້ມເຕີມ.

Hiring Family or Friends as Your Caregiver – A Guide for Adults Needing Care (DSHS 22-1332) ແມ່ນປຶ້ມນ້ອຍຟຣີທີ່ເອົາຄັດລັບໃນພາກປະຕິບັດ ແລະ ຄຳແນະນຳໃຫ້ຖ້າຫາກว่าท่านจ้างเอิาสะมาชิกคอบคิว หลื หมู่เผื่อนเผื่อจะใช้การเบิ่งแยงดูแล. จิ่งเบิ่งหน้า 16 เพื่อรายระอยดสำลับการสิ่งเอิา.

ມັນມີທາງເລືອກຂອງການເບິ່ງແຍງດູແລຢູ່ໃນເຮືອນຫລາຍໆຢ່າງມີໄວ້ໃຫ້ຖ້າຫາກว่าท่านต้องการความช่วยเหลือนำการปิ่นปัวสุขะพาบ.

ความช่วยเหลือนำความต้องการนำการปิ่นปัวสุขะพาบ

ในผ่านมา, ຫລາຍໆຄົນຍ້າຍໄປຢູ່ເຮືອນເບິ່ງແຍງຜູ້ເຖົ້າຖ້າຫາກว่าการเบิ่งแยงดูแลแม่นต้องการจากผู้ช่วยอานถ้านการปิ่นปัวสุขะพาบผู้ที่มีใบปะกาดเชิ่นว่านายหมอลิงทะบูน. ດຽວນີ້, ມັນມີທາງເລືອກຂອງການເບິ່ງແຍງດູແລຢູ່ຕາມເຮືອນຫລາຍໆທາງຊຶ່ງອາດຈະມີໄວ້ໃຫ້ຖ້າຫາກว่าท่านต้องการความช่วยเหลือนำพาละหน้าที่การปิ่นปัวสุขะพาบ.

ການເບິ່ງແຍງດູແລທີ່ທີ່ຖືກຊີ້ນຳໂດຍຕົນເອງ

ຖ້າທ່ານອາສັຍຢູ່ໃນເຮືອນຂອງທ່ານ, ທ່ານສາມາດຊີ້ນຳ ແລະ ຄວບຄຸມເບິ່ງນຳ IP ເພື່ອຈະຊ່ວຍເຫລືອທ່ານນຳພາລະຫນ້າທີ່ການປິ່ນປົວສຸຂະພາບທີ່ທ່ານບໍ່ສາມາດເຮັດເອງໄດ້ຍ້ອນສະພາບພິການຂອງທ່ານ. ອັນນີ້ຈະລວມເອົາສິ່ງທີ່ IP ອາດຈະບໍ່ສາມາດເຮັດໄດ້ຕາມປົກກະຕິຊຶ່ງລວມເອົາການຈັດການເຮື່ອງປາກົນ, ໂຄງການຖ່າຍ, ການແຫຍ່ຍ່ຽວ, ແລະ ການປິ່ນປົວບາດແຜ.

ການແຕ່ງຕັ້ງນາຍຫມໍ

ຢູ່ໃນໂຄງການນີ້, ນາຍຫມໍລິງທະບູນ (RN) ຕົກລົງເບິ່ງຄວາມຕ້ອງການຈຳເປັນໃນການປິ່ນປົວສຸຂະພາບຂອງທ່ານ ແລະ ຝຶກອົບຮົມ ແລະ ຄວບຄຸມເບິ່ງນຳຜູ້ຊ່ວຍພະຍາບານ ຫລື ຜູ້ຊ່ວຍການເບິ່ງແຍງດູແລຢູ່ເຮືອນທີ່ຖືກຢັ້ງຢືນ (HCA) ເພື່ອໃຫ້ການດູແລສຸຂະພາບຕ່າງໆທີ່ທ່ານບໍ່ສາມາດເຮັດເອງໄດ້. ມັນມີກົດລະບຽບບາງຢ່າງກ່ຽວກັບຂະນົດຂອງການປິ່ນປົວທີ່ສາມາດເຮັດແທນໄດ້ ແລະ ບໍ່ສາມາດເຮັດແທນໄດ້.

ຜູ້ຊ່ວຍພະຍາບານ ຫລື HCA ຕ້ອງໄດ້ຮັບການຝຶກອົບຮົມມາ ແລະ ໄດ້ຮັບອະນຸມັດຈາກນາຍຫມໍຜູ້ແຕ່ງຕັ້ງກ່ອນທີ່ຈະເຮັດໜ້າທີ່ວຽກທີ່ຖືກແຕ່ງຕັ້ງໃຫ້ທຸກໆຢ່າງ. ການແຕ່ງຕັ້ງນາຍຫມໍແມ່ນມີໄວ້ໃຫ້ທ່ານທັງຢູ່ໃນເຮືອນຂອງທ່ານ ຫລື ໃນສະຖານທີ່ເບິ່ງແຍງດູແລຢູ່ຕາມຫໍພັກ.

ການປິ່ນປົວສຸຂະພາບຢູ່ເຮືອນ

ຫ້ອງການປິ່ນປົວສຸຂະພາບຢູ່ເຮືອນຍັງເອົາການປິ່ນປົວພະຍາບານທີ່ຊ່ຽວຊານໃຫ້ ຫລື ຜູ້ຊ່ວຍພະຍາບານຢູ່ເຮືອນໃຫ້. ພະນັກງານສັງຄົມຂອງທ່ານສາມາດເຮັດວຽກນຳທ່ານກ່ຽວກັບເຣື່ອງນີ້.

ໂຄງການຮ້ອສປິສ

ການເບິ່ງແຍງດູແລຄົນເຈັບທີ່ມີພະຍາດປິ່ນປົວບໍ່ໄດ້ກ່ຽວພັນນຳຄະນະທີມງານຂອງນັກວິຊາການ ແລະ ຜູ້ອາສາສະມັກຜູ້ທີ່ໃຫ້ການເບິ່ງແຍງດູແລດ້ານການພະຍາບານ, ດ້ານຈິດໃຈ, ແລະ ການປິ່ນປົວດ້ວຍຄວາມເຊື່ອຖືແກ່ບຸກຄົນຜູ້ໃກ້ຍັ້ນສຸດທ້າຍຂອງຊີວິດ ແລະ ຄອບຄົວຂອງເຂົາເຈົ້າ. ການເບິ່ງແຍງດູແລຮ້ອສປິສສ່ວນໃຫຍ່ແລ້ວແມ່ນບໍລິການຢູ່ກັບເຮືອນຂອງທ່ານເອງແຕ່ກໍ່ຍັງມີບໍລິການຢູ່ຕາມສະຖານທີ່ປິ່ນປົວອື່ນໆອີກ, ຊຶ່ງຮວມເອົາໂຮງພະຍາບານ. ການສະເນີສິ່ງຈາກທ່ານໝໍຖືເປັນສິ່ງທີ່ຕ້ອງມີ.

ການບໍລິການແນວອື່ນທີ່ສາມາດຊ່ວຍໄດ້

ຕໍ່ລົງໄປນີ້ແມ່ນການບໍລິການເພີ້ມເຕີມຊຶ່ງອາດຈະມີໄວ້ໃຫ້.

ການບໍລິການກາງເວັນສຳລັບຜູ້ໃຫຍ່

ການບໍລິການກາງເວັນສຳລັບຜູ້ໃຫຍ ແມ່ນໂຄງການທີ່ເອົາການບໍລິການໃຫ້ຢູ່ໃນແບບເປັນກຸ່ມຢູ່ນອກເຮືອນ. ໂຄງການການບໍລິການກາງເວັນສຳລັບຜູ້ໃຫຍ່ລວມເອົາການຊ່ວຍເຫລືອດ້ານການບົວລະບັດສ່ວນຕົວ, ກິຈກັມການເຄື່ອນໄຫວທາງສັງຄົມ ແລະ ການຮັກສາໂຣກ, ການສຶກສາ, ການກຳກັບຄວບຄຸມສຸຂະພາບປະ

ຈຳ, ອາຫານ ແລະ ຂອງກິນຫລິ້ນທີ່ມີພະລານາໄມ, ການປະສານງານດ້ານການຂົນສົ່ງ, ການຊ່ວຍແກ້ໄຂ ຂັ້ນຕົ້ນ, ແລະ ການພະຍາບານສຸກເສີນ.

ໂຄງການການບໍລິການກາງເວັນສຳລັບຜູ້ໃຫຍ່ເອົາການບໍລິການທັງຫມົດເຫລົ່ານີ້ໃຫ້ບວກກັບການເບິ່ງແຍງ ຜູ້ເຖົ້າ ແລະ ການຝຶກກາຍບໍລິຫານເພື່ອຄືນສູ່ສະພາບ ເດີມ.

ການດັດແປງສິ່ງແວດລ້ອມ
ການດັດແປງຕ່າງໆ, ເຊັ່ນເຮັດທາງແລ່ນຣົດລໍ້ນັ່ງ, ການເຮັດຣາວສັາວຈັບຢູ່ຫ້ອງອາບນ້ຳ ຫລື ໃກ້ກັບສ້ວມ ຖ່າຍ, ຫລື ການຂະຍາຍໃຫ້ກວ້າງອອກໃນປ່ອງປະຕູເຂົ້າອອກເພື່ອແລ່ນລໍ້ນັ່ງ, ອາດຈະຖືກເພີ່ມເຂົ້າໃສ່ ເຮືອນຂອງທ່ານເພື່ອຊ່ວຍໃຫ້ທ່ານປັບຕົວຕໍ່ຄວາມຕ້ອງການຕໍ່ການປ່ຽນແປງຢ່າງປອດພັຍ.

ການສົ່ງອາຫານຕ່າງໆໃຫ້ຢູ່ບ້ານ
ອາຫານທີ່ມີທາດບຳຣຸງຈະຖືກນຳສົ່ງເຖິງເຮືອນຂອງທ່ານມື້ລະເທື່ອ.

ການຝຶກອົບຮົມໂດຍສະເພາະບຸກຄົນ
ການຝຶກອົບຮົມຈະຖືກເອົາໃຫ້ຖ້າຫາກว່າທ່ານ ຫລື ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານຕ້ອງການຣາຍຣະ ອຽດ/ຄວາມຊຳນິຊຳນານເພີ້ມເຕີມອີກເພື່ອຈະດຳເນີນແຜນການປິ່ນປົວພະຍາບານຂອງທ່ານໃຫ້ໄດ້ຜົນດີ.

ອຸປກອນພະຍາບານ
ອຸປກອນພະຍາບານທີ່ຈຳເປັນຈະຖືກຊື້ເອົາຊຶ່ງບໍ່ຖືກຮັບຈ່າຍໃຫ້ໂດຍເມດິເຄດ ຫລື ເມດິແຄຣ.

ຣະບົບການຕອບໂຕ້ສະພາບສຸກເສີນສ່ວນຕົວ (PERS)
ເຄື່ອງເອເລັກໂທຣນິກຈະຖືກເອົາໃຫ້ທ່ານເພື່ອຊ່ວຍທ່ານໃຫ້ໄດ້ຮັບຄວາມຊ່ວຍເຫລືອຍາມສຸກເສີນ. ຣະບົບ ດັ່ງກ່າວຈະຖືກຕິດຕັ້ງຕໍ່ໃສ່ກັບສາຍໂທຣະສັບຂອງທ່ານຫລື ທ່ານອາດສວມກະດຸມ "ຊ່ວຍ" ທີ່ຖືໄປມາໄດ້. ເມື່ອຖືກເລີ່ມເປີດຂຶ້ນ, ພະນັກງານຢູ່ສູນກາງຕອບກໍ່ຈະໂທຫາ 911 ແລະ/ຫລື ເຮັດທຸກຢ່າງຕາມທີ່ໄດ້ ວາງແຜນໄວ້ລ່ວງໜ້າແລ້ວ.

ການຂົນສົ່ງໄປມາ
ການຂົນສົ່ງໄປມາໃນຂອບເຂດຈຳກັດແມ່ນມີໃຫ້ເພື່ອຊ່ວຍເຫລືອທ່ານໄປເຖິງການບໍລິການ ແລະ ກິຈກັມ ທີ່ຕ້ອງການ.

ການຝຶກອົບຮົມເພີ້ມພູນຄວາມຊຳນານ
ການຝຶກອົບຮົມທີ່ຖືກເອົາໃຫ້ທ່ານເພື່ອຈະກາຍເປັນເອກຣາດໄດ້ຫລາຍກວ່າເກົ່ານຳການເບິ່ງແຍງດູແລ ສ່ວນຕົວຂອງທ່ານ.

ການຝຶກອົບຮົມກ່ຽວກັບການບໍລິຫານ ຜູ້ເບິ່ງແຍງດູແລ
ແຫລ່ງຊ່ວຍເຫລືອທີ່ຈະຊ່ວຍທ່ານຮູ້ນຮູ້ວ່າຈະຈ້າງເອົາ, ໄລ່ອອກ, ແລະ ຄວບຄຸມ ກັມລັບຜູ້ໃຫ້ການເບິ່ງແຍງດູແລສ່ວນຕົວຂອງທ່ານແນວໃດ.

ໂຄງການເພີ່ມເຕີມ

ໂຄງການຕໍ່ລົງໄປນີ້ໄດ້ຖືກຈຳກັດເຖິງເຂດພື້ນທີ່ບາງບ່ອນທົ່ວລັດ. ຈົ່ງເວົ້ານຳພະນັກງານສັງຄົມຂອງທ່ານ ເພື່ອຈະຮຽນຮູ້ເພີ່ມເຕີມກ່ຽວກັບໂຄງການເຫລົ່ານີ້.

ການບໍລິການ New Freedom ທີ່ຖືກລູກຄ້າຊີ້ນຳ
New Freedom ເປັນໂຄງການໜຶ່ງທີ່ເຮັດໃຫ້ທ່ານມີການຄວບຄຸມໄດ້ຫລາຍ ແລະ ມີປາກສຽງກ່ຽວກັບ ການບໍລິການທີ່ທ່ານໄດ້ຮັບ. ດ້ວຍໂຄງການ New Freedom, ທ່ານຈະໄດ້ຮັບງົບປະມານປະຈຳເດືອນ ເພື່ອຈະຊື້ເອົາການບໍລິການ ແລະ ສິ່ງຂອງເພື່ອຈະຊ່ວຍທ່ານໃຫ້ດຳລົງຊີວິດໃຫ້ເປັນເອກະລາດໄດ້ເທົ່າທີ່ຈະເປັນ ໄປໄດ້.

ຜູ້ປຶກສາຜູ້ທີ່ຮູ້ຈັກດີກ່ຽວກັບທາງເລືອກໃນການບໍລິການຢູ່ໃນທ້ອງຖິ່ນຈະເຮັດວຽກນຳທ່ານເພື່ອຈະຊື້ເອົາການບໍ ລິການທີ່ທ່ານຕ້ອງການ. ຜະແນກຄວບຄຸມກຳກັບນຳການເງິນຈະຈ່າຍເງິນໃຫ້ຜູ້ບໍລິການຂອງທ່ານ ແລະ ຊ່ວຍຄວບຄຸມເບິ່ງນຳເງິນງົບປະມານຂອງທ່ານ.

ໂຄງການ New Freedom ມີໄວ້ໃຫ້ໃນປັດຈຸບັນນີ້ສຳລັບບຸກຄົນຜູ້ທີ່ອາສັຍຢູ່ໃນຄິງຄາວຕີ ແລະ ພຽກຊ໌ຄາວຕີ.

ໂຄງການການເບິ່ງແຍງດູແລຮວມກັນທຸກຢ່າງສຳລັບຄົນແກ່ຊາຣາ (PACE)
ໂຄງການ PACE ເອົາການເຂົ້າເຖິງທີ່ຮວມການບໍລິການ, ມີຣະບຽບວິນັຍຫລາຍຢ່າງ, ເປັນທີມງານໃນ ການປິ່ນປົວສຸຂະພາບ ແລະ ການບໍລິການສັງຄົມສຳລັບຜູ້ໃຫຍ່ອາຍຸ 55 ປີ ແລະ ແກ່ກว່າຢູ່ທີ່ສູນກາງ PACE ທ້ອງຖິ່ນ. ຖືກແຕ່ງອອກມາສະເພາະເພື່ອຕອບສະນອງຄວາມຕ້ອງການຂອງແຕ່ລະບຸກຄົນ, ສູນກາງ PACE ທ້ອງຖິ່ນເປັນຈຸດມຸ່ງຫມາຍໃສ່ສຳລັບການປະສານງານ ແລະ ການເອົາການບໍລິການສ່ວນຫລາຍໃຫ້.

ໂຄງການ PACE ມີໄວ້ໃຫ້ໃນປັດຈຸບັນນີ້ໃນພາກສ່ວນນຶ່ງຂອງຄິງຄາວຕີ. ເພື່ອຮູ້ຈັກເພີ່ມເຕີມອີກກ່ຽວກັບ ໂຄງການ PACE ໃນຄິງຄາວຕີ, ໂທຫາ Providence ElderPlace ໄດ້ທີ່ເລກ 206-320-5325.

ທາງເລືອກສຳລັບບ່ອນຢູ່ອາສັຍ ແລະ ການເບິ່ງແຍງດູແລ

ມັນມີທາງເລືອກຫລາຍໆທາງວ່າທ່ານສາມາດອາສັຍຢູ່ໃສ ແລະ ໄດ້ຮັບການເບິ່ງແຍງດູແລຢູ່ໃສຖ້າຫາກว່າ ທ່ານບໍ່ສາມາດຢູ່ໃນເຮືອນຕໍ່ໄປໄດ້ອີກແລ້ວ. ຄົນສ່ວນຫລາຍຄຸ້ນເຄີຍນຳເຮືອນເບິ່ງແຍງດູແລຜູ້ເຖົ້າ. ຜູ້ຄົນຈະ ບໍ່ຄຸ້ນເຄີຍນຳທາງເລືອກຂອງການເບິ່ງແຍງດູແລອາສັຍຢູ່ນຳແນວອື່ນປານໃດ.

ການອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອຈະຖືກໃຊ້ສະເມີເພື່ອຈະອະທິບາຍສະຖານທີ່ເບິ່ງແຍງດູແລອາສັຍຢູ່ນຳ ຕ່າງໆທີ່ເອົາບ່ອນຢູ່ອາສັຍໃຫ້, ການບໍລິການຈຳເປັນ ແລະ ຮັບເອົາຄວາມຮັບຜິດຊອບທົ່ວໄປສຳລັບຄວາມປອດ ພັຍ ແລະ ຄວາມຢູ່ດີມີແຮງຂອງຜູ້ອາສັຍຢູ່.

ສິ່ງຕໍ່ລົງໄປນີ້ແມ່ນຣາຍລະອຽດທີ່ຊ່ວຍເຫລືອໄດ້ຫລາຍບາງຢ່າງກ່ຽວກັບທາງເລືອກບ່ອນຢູ່ສຳລັ ບການເບິ່ງ ແຍງດູແລຢູ່ຕາມເຮືອນທີ່ອາດຈະເປັນໄປໄດ້ສຳລັບບຸກຄົນຜູ້ທີ່ໄດ້ຮັບເມດິເຄດ. ສະຖານທີ່ຕ້ອງຖືກອອກໃບອະນຸ ຍາດໃຫ້ໂດຍຣັດວໍຊິງຕັນ ແລະ ຮັບເອົາການຈ່າຍເງິນຂອງເມດິເຄດ້ສຳລັບຜູ້ອາສັຍຢູ່.

ເຮືອນຄອບຄົວຜູ້ໃຫຍ່ ແລະ ສະຖານທີ່ອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອ

ເຮືອນຄອບຄົວຜູ້ໃຫຍ່ (AFH) ໄດ້ຖືກອອກໃບອະນຸຍາດໃຫ້ເພື່ອຈະເອົາບ່ອນຢູ່ອາສັຍ ແລະ ການເບິ່ງແຍງດູແລໃຫ້ຮອດເຖິງຫົກຄົນຢູ່ໃນເຮືອນ. AFH ຈະຖືກດຳເນີນທຸຣະກິດໂດຍຄອບຄົວທີ່ມີເດັກ, ຄົນໂສດ, ຄູ່ ຜົວເມັຽ, ຫມູ່ເພື່ອນ, ຫລື ຜູ້ຮ່ວມການຄ້າກໍໄດ້. AFH ຍັງຈະຈ້າງເອົາຄົນງານຄົນອື່ນໄດ້. AFH ບາງບ່ອນອະນຸຍາດໃຫ້ມີສັດລ້ຽງໄດ້. ໃນບາງເຮືອນ, ຫລາຍພາສາກໍ່ອາດໃຊ້ປາກເວົ້າກັນ.

ສະຖານທີ່ອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອ (ALF) ໄດ້ຖືກອອກໃບອະນຸຍາດໃຫ້ເອົາບ່ອນຢູ່ອາສັຍ ແລະ ການເບິ່ງແຍງດູແລໃຫ້ຮອດເຖິງເຈັດຄົນ ຫລື ຫລາຍ ກວ່າຢູ່ໃນເຮືອນ ຫລື ສະຖານທີ່ອາສັຍຢູ່. ທາງເລືອກບ່ອນອາສັຍຢູ່ເລີ້ມຕັ້ງແຕ່ຫ້ອງທີ່ມີການເອົ້າເຖິງບ່ອນອາສັຍຢູ່ລວມກັນໄປຫາອາພາດເມັນຂອງທ່ານເອງ. ALFs ນີ້ແຕກຕ່າງໃນຂະນາດ ແລະ ການເປັນເຈົ້າຂອງຈາກການດຳເນີນກິຈການທີ່ມີ 7 ຕຽງນອນ ຊຶ່ງຖືກດຳເນີນກິຈການໂດຍຄອບຄົວນຶ່ງ, ໄປຫາສະຖານທີ່ຊຶ່ງມີ 150 ຕຽງນອນຊຶ່ງຖືກດຳເນີນກິຈການໂດຍບໍລິສັດໃຫຍ່ຣະດັບຊາດ.

AFHs ແລະ ALFs ທຸກໆບ່ອນເອົາບ່ອນຢູ່ອາສັຍ ແລະ ອາຫານໃຫ້ (ຫ້ອງ ແລະ ກິນນອນ), ແຕກຕ່າງການໄປໃນຣະດັບຂອງການຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວ, ແລະ ຮັບເອົາຄວາມຮັບຜິດຊອບທົ່ວໄປສຳລັບຄວາມປອດພັຍ ແລະ ການເບິ່ງແຍງດູແລຂອງທ່ານ. ການບໍລິການເພີ່ມເຕີມແນວໃດແດ່ທີ່ຖືກເອົາໃຫ້ກໍ່ແຕກຕ່າງກັນສຳລັບແຕ່ລະເຮືອນ ແລະ ອາດຈະລວມເອົາ:

- ການບໍລິການພະຍາບານບາງຄັ້ງຄາວ (ນາຍພະຍາບານມີໄວ້ໃຫ້ແບບເຄື່ອງເວລາ).
- ການຊ່ວຍເບິ່ງນຳ ຫລື ການຄວບຄຸມນຳການກິນຢາ.
- ການເບິ່ງແຍງດູແລພິເສດສະເພາະໃຫ້ແກ່ບຸກຄົນຜູ້ທີ່ດຳຣົງຊີວິດນຳຄວາມພິການດ້ານການຈະເຣີນເຕີບໂຕ, ຄວາມຈຳເຊື່ອມ, ຫລື ຄວາມເຈັບປ່ວຍດ້ານສຸຂະພາບຈິດ.

ພະນັກງານສັງຄົມຂອງທ່ານຈະມີລາຍຊື່ ແລະ ຄວາມຮູ້ຈັກຄຸ້ນເຄີຍວ່າເຮືອນບ່ອນໃດແດ່ທີ່ມີຢູ່ໃນເຂດທ້ອງຖິ່ນຂອງທ່ານ. ລາຍຊື່ຂອງເຮືອນຄອບຄົວຜູ້ໃຫຍ່ ແລະ ສະຖານທີ່ອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອຍັງສາມາດຖືກພົບເຫັນໄດ້ອີກຢູ່ໃນອິນເຕີແນດທີ່ https://www.dshs.wa.gov/altsa.

ການເລືອກເອົາການເບິ່ງແຍງດູແລຢູ່ໃນເຮືອນຄອບຄົວຜູ້ໃຫຍ່ຫລືສະຖານທີ່ອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອ *(Choosing Care in an Adult Family Home or Assisted Living Facility)* (DSHS 22-707) ເປັນປຶ້ມນ້ອຍຟຣີຈາກກົມ DSHS ຊຶ່ງຈະເວົ້າກ່ຽວກັບວ່າຈະຊອກຫາ ແລະ ເລືອກເອົາເຮືອນບ່ອນເຫມາະສົມສຳລັບທ່ານໄດ້ແນວໃດ. ປຶ້ມນ້ອຍ ຈະລວມເອົາລາຍການຫມາຍອອກຂອງສິ່ງທີ່ຈະຖາມ ແລະ ຊອກເບິ່ງຊຶ່ງຈະສາມາດຊ່ວຍເຫລືອທ່ານທຳການຕັດສິນໃຈ. ອ່ານຢູ່ທາງອິນເຕີແນດ໌ໄດ້ທ່ ່ www.dshs.wa.gov/SESA/publications-library.

ມັນມີທາງເລືອກຫລາຍໆທາງວ່າ ທ່ານສາມາດອາສັຍຢູ່ໃສ ແລະ ໄດ້ຮັບການເບິ່ງແຍງດູແລຢູ່ໃສຖ້າຫາກว่า ท่านบ่สามาถอยู่ในเรือนต่ไปได้อีกแล้ว.

ສະຖານທີ່ເບິ່ງແຍງຜູ້ເຖົ້າ

ສະຖານທີ່ເບິ່ງແຍງຜູ້ເຖົ້າເອົາໃຫ້ຕະລອດ 24 ຊົ່ວໂມງ, ການເບິ່ງແຍງດູແລຜູ້ເຖົ້າທີ່ຖືກຄວບຄຸມເບິ່ງນຳ, ການເບິ່ງແຍງດູແລສ່ວນຕົວ, ການຝຶກແອບ, ການກຳກັບນຳອາຫານການກິນ, ກິຈກັມທີ່ຖືກຈັດແຈງໄວ້ໃຫ້, ການບໍລິການສັງຄົມ, ຫ້ອງຢູ່, ການກິນນອນ, ແລະ ການບໍລິ ການຊັກເຄື່ອງ.

ການກັບຄືນມາເຮືອນຫລັງຈາກການຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າ ຫລື ໂຮງພະຍາບານ

ຖ້າຫາກວ່າທ່ານກຳລັງອາສັຍຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າໃນປັດຈຸບັນນີ້ ຫລື ໄດ້ເຂົ້າໂຮງພະຍາບານມາ ແລ້ວ, ມັນອາດຈະມີການບໍລິການ ແລະ ການຊູ້ມຊູຫລາຍໆຢ່າງທີ່ມີໄວ້ໃຫ້ເພື່ອຈະຊ່ວຍເຫລືອທ່ານໃຫ້ກັບຄືນເມືອເຮືອນ ຫລື ທີ່ຈະເລືອກເອົາທາງເລືອກເອົາບ່ອນຢູ່ອາສັຍອື່ນໆບ່ອນທີ່ທ່ານສາມາດໄດ້ຮັບການປິ່ນປົວທີ່ທ່ານຕ້ອງການ. ຜູ້ຈັດການເອກສານກ່ຽວກັບສະຖານທີ່ເບິ່ງແຍງຜູ້ເຖົ້າຈາກຫ້ອງການບໍລິການຢູ່ຕາມເຮືອນ ແລະ ຊຸມນຸມຊົນທ້ອງຖິ່ນຂອງທ່ານຈະຊ່ວຍເຫລືອທ່ານ ຫວບຫວນເບິ່ງຄືນໃນທາງເລືອກໃນການປິ່ນປົວ ແລະ ບ່ອນຢູ່ອາສັຍຂອງທ່ານ ແລະ ເຮັດວຽກນຳທ່ານເພື່ອຈະອອກແບບແຜນການປ່ອຍຕົວອອກມາ.

ນອກຈາກນັ້ນອີກ, ຜູ້ຈັດການເອກສານກ່ຽວກັບສະຖານທີ່ເບິ່ງແຍງຜູ້ເຖົ້າສາມາດຊ່ວຍຊີ້ບອກການບໍລິການຜັນປ່ຽນຕໍ່ມາທີ່ອາດຈະມີໄວ້ໃຫ້ແກ່ທ່ານ. ຕົວຢ່າງຂອງການບໍລິການເຫລົ່ານີ້ຈະລວມເອົາຄວາມຊ່ວຍເຫລືອ:

- ການຄົ້ນຄວ້າຊອກຫາທາງເລືອກບ່ອນຢູ່ອາສັຍຂອງທ່ານ ແລະ ການຊອກຫາບ່ອນທີ່ຈະຢູ່.
- ການເຮັດແຜນການປ່ອຍຕົວ ແລະ ການປິ່ນປົວສ່ວນບຸກຄົນອອກມາ.
- ການຈ່າຍຄ່າລາຍຈ່າຍບາງຢ່າງສຳລັບເຮືອນຂອງທ່ານໃນຂະນະທີ່ທ່ານກຳລັງຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າ (ສຳລັບຫົກເດືອນ ຫລື ຕ່ຳກວ່າ).
- ການຈ່າຍເງິນປະກັນພັຍມັດຈຳ ຫລື ການເປີດນ້ຳໄຟໃຫ້ໃຊ້ການໄດ້.
- ການດັດແປງເຮືອນຂອງທ່ານໃຫ້ເຮັດໃຫ້ປອດພັຍກວ່າ, ເຊັ່ນວ່າການຕື່ມທາງແລ່ນຂຶ້ນຂອງລ້ອຸກ ຫລື ຫ້າວກຳຢູ່ຫ້ອງນ້ຳ.
- ການຕັ້ງຕົວໃຫມ່ອີກຢູ່ໃນຊຸມນຸມຊົນ.

ຕິດຕໍ່ຫາຜູ້ຈັດການເອກສານກ່ຽວກັບສະຖານທີ່ເບິ່ງແຍງຜູ້ເຖົ້າຂອງທ່ານ ຫລື ຫ້ອງການບໍລິການຢູ່ຕາມເຮືອນ ແລະ ຊຸມນຸມຊົນທ້ອງຖິ່ນຂອງທ່ານເພື່ອຮາຍຮະອຽດເພີ້ມເຕີມ (ເບິ່ງທາງຫລັງຂອງປຶ້ມນ້ອຍເພື່ອເລກໂທຣະສັບ).

ທ່ານມີທາງເລືອກທາງນຶ່ງ...

ປຶ້ມນ້ອຍຫົວນີ້ໄດ້ໃຫ້ຂ່າວຂໍ້ມູນໃຫ້ທ່ານກ່ຽວກັບການຮ້ອງຂໍເອົາເມດິເຄດ ແລະ ທາງເລືອກຂອງທ່ານສຳລັບການເບິ່ງແຍງດູແລຖ້າທ່ານຫາກມີເງື່ອນໄຂໄດ້ຮັບ.

ມັນມີຫລາຍໆຄົນ, ຫລາຍໆທາງເລືອກ, ແລະ ມີຫລາຍແຫລ່ງຊ່ວຍເຫລືອໄວ້ໃຫ້ເພື່ອຊ່ວຍທ່ານໃຫ້ຢູ່ດ້ວຍຕົນເອງ ໂດຍບໍ່ຂຶ້ນນຳໃຜເທົ່າທີ່ເປັນໄປໄດ້.

ດ້ວຍການຊູ້ມຊູຊ່ວຍເຫລືອ, ທ່ານ ອາດຈະບໍ່ຕ້ອງໄດ້ຢູ່ໃນສະຖານທີ່ປິ່ນປົວ ເບິ່ງແຍງຜູ້ເຖົ້າ.

ການເຂົ້າຮ່ວມໃນການບໍລິການຢູ່ຕາມເຮືອນ ແລະ ຊຸມນຸມຊົນແມ່ນຕາມສະມັກໃຈ. ທ່ານມີສິດທີ່ຈະ ປະຕິເສດ ຫລື ຢຸດການບໍລິການໄດ້ທຸກໆເວລາ.

ເມື່ອເວລາໃດທີ່ທ່ານລົ້ມຕົ້ນໄດ້ຮັບການບໍລິການຕ່າງໆ ແລ້ວ, ໃຫ້ທ່ານຕິດຕໍ່ຫາພະນັກງານສັງຄົມຂອງທ່ານ ຖ້າທ່ານຫາກມີຄຳຖາມ ຫລື ຄວາມຕ້ອງການໃນການເບິ່ງແຍງດູແລຂອງທ່ານໄດ້ປ່ຽນແປງ.

ລາຍລະອຽດເພີ່ມເຕີມ

ການສັ່ງເອົາເອກສານພິມອອກມາ

ທ່ານສາມາດສັ່ງເອົາປຶ້ມນ້ອຍຄູ່ມືຫົວນີ້ ແລະ ເອກສານ ພິມອອກມາຂອງກົມ DSHS ແນວອື່ນໂດຍ ຜ່ານ ກົມການພິມຂອງລັດວໍຊິງຕັນ (DOP) ໄດ້. ໃຫ້ເຂົ້າເບິ່ງແວບໄຊທ์ຂອງກົມ DOP ໄດ້ທີ່: www.prt.wa.gov ແລະ ບີບໃສ່ຮ້ານຄ້າທົ່ວໄປ (General Store).

ການຮ້ອງຂໍເອົາເອກສານທີ່ພິມອອກມາອາດຂໍໄດ້ອີກຄືກັນໂດຍຜ່ານທາງ:
ອີແມລ໌ໄດ້ທີ່: fulfillment@prt.wa.gov
ໂທຣະສັບໄດ້ທີ່: 360-570-3062
ແຟກຊ์ໄດ້ທີ່: 360-586-6361

ໃຫ້ທ່ານໝັ້ນໃຈວ່າໄດ້ຂຽນຊື່ຂອງເອກສານພິມອອກມາ, ເລກຂອງເອກສານພິມອອກມາ ແລະ ຊື່ຂອງຜູ້ຕິດຕໍ່ ແລະ ທີ່ຢູ່ບ່ອນສົ່ງ ໄປສະນີ.

ເອກສານພິມອອກມາທຸກໆຢ່າງ, ລວມທັງຂຸດທີ່ຖືກແປພາສາແລ້ວ, ທີ່ຖືກບົ່ງຢູ່ໃນປຶ້ມນ້ອຍຫົວນີ້ ແລະ ຫລາຍໆ ແນວອີກສາມາດຖືກພົບເຫັນໄດ້ຫລືອ່ານທາງອອນລາຍນ໌ໄດ້ທີ່ https://www.dshs.wa.gov/altsa ຫລື http://www.hca.wa.gov/medicaid/forms/Pages/index.aspx.

ການຕິດຕໍ່ພົວພັນໃນການດຳຣົງຊີວິດຢູ່ໃນ ຊຸມນຸມຊົນ (Community Living Connections) (CLC)

ທາງເລືອກຂອງການເບິ່ງແຍງດູຫລາຍໆຢ່າງທີ່ໄດ້ເວົ້າມາຢູ່ໃນປຶ້ມນ້ອຍຫົວນີ້ແມ່ນມີໄວ້ໃຫ້ສຳລັບຜູ້ໃຫຍ່ທີ່ຈະ ຈ່າຍເງິນໃນນາມເອກະຊົນ, ຜ່ານ Veterans Health Administration, ຫລື ໂດຍຜ່ານປະກັນພັຍ ສຳລັບການບໍລິການເບິ່ງແຍງດູແລຂະຍະຍາວ. ຖ້າຫາກว່າທ່ານບໍ່ມີເງື່ອນໄຂໄດ້ຮັບເມດິເຄດ ແລະ ປາກລົມກັບ ຜູ້ໃດຜູ້ໜຶ່ງກ່ຽວກັບການບໍລິການ ແລະ ແຫລ່ງຊ່ວຍເຫລືອຕ່າງໆແນວໃດແດ່ທີ່ມີໄວ້ໃຫ້ໃນເຂດທີ່ທ່ານອາໄສຢູ່, ຈົ່ງໂທຫາຫ້ອງການ CLC ທ້ອງຖິ່ນຂອງທ່ານ ຫລື ໄປທີ່: www.waclc.org.

ເພື່ອຊອກຫາຫ້ອງການ CLC ທ້ອງຖິ່ນຂອງທ່ານ, ໃຫ້ຢັ້ງຢືນປາມແວບໄຊທ์ຂອງ Washington's Community Living Connections (CLC) ໄດ້ທີ່ www.waclc.org ແລະ ໃຫ້ບີບໃສ່ "Get Help Understanding and accessing services"; ຊອກຫາຫ້ອງການ Area Agency on Aging (AAA) ຢູ່ໃນປຶ້ມ ໂທຣະສັບສີເຫລືອງຂອງທ່ານພາຍໃຕ້ "Senior Services"; ຫລືໂທເລກ 1-800-422-3263 ແລະ ຂໍເອົາເລກໂທຣະສັບ.

ແຫລ່ງຊ່ວຍເຫລືອສຳລັບຜູ້ເບິ່ງແຍງດູແລ

ມັນມີແຫລ່ງຊ່ວຍເຫລືອຫລາຍໆບ່ອນເພື່ອຈະຊ່ວຍເຫລືອອູ້ມຊູຄອບຄົວ ແລະ ຫມູ່ເພື່ອນຜູ້ທີ່ໃຫ້ການເບິ່ງແຍງດູແລທີ່ບໍ່ໄດ້ຖືກຈ່າຍເງິນໃຫ້. ທ່ານບໍ່ຕ້ອງໄດ້ຂໍເອົາ ຫລື ກຳລັງໄດ້ຮັບເມດິເຄດ໌ເພື່ອຈະສວຍໂອກາດໃນແຫລ່ງຊ່ວຍເຫລືອເຫລົ່ານີ້.

ໂຄງການອູ້ມຊູຊ່ວຍເຫລືອຜູ້ໃຫ້ການເບິ່ງແຍງດູແລຈາກຄອບຄົວ (FCSP)

ໂຄງການອູ້ມຊູຊ່ວຍເຫລືອຜູ້ໃຫ້ການເບິ່ງແຍງດູແລຈາກຄອບຄົວຊ່ວຍ ຜູ້ທີ່ໃຫ້ການເບິ່ງແຍງດູແລທີ່ບໍ່ໄດ້ຖືກຈ່າຍເງິນໃຫ້ຂອງຜູ້ໃຫຍ່ອາຍຸ 18 ປີ ແລະ ແກ່ກว່າຜູ້ທີ່ບໍ່ວ່າຈະແມ່ນບໍ່ມີເງື່ອນໄຂໄດ້ຮັບ ຫລືວ່າ ບໍ່ສົນໃຈໃນການບໍລິການປິ່ນປົວຣະຍະຍາວຂອງເມດິເຄດ໌. ພະນັກງານສາມາດຊ່ວຍເຫລືອທ່ານ:

- ຊອກຫາແຫລ່ງຊ່ວຍເຫລືອ/ການບໍລິການໃນທ້ອງຖິ່ນ*.
- ຊອກຫາກຸ່ມອູ້ມຊູຜູ້ໃຫ້ການເບິ່ງແຍງດູແລ ແລະ ການໃຫ້ຄຳປຶກສາ.
- ໄດ້ຮັບການຝຶກອົບຮົມໃນເຣື່ອງການໃຫ້ການເບິ່ງແຍງດູແລອັນເຈາະຈົງ ຫລື ເຄື່ອງໃຊ້ສອຍ/ອຸບປະກອນຂອງຜູ້ໃຫ້ການເບິ່ງແຍງດູແລ.
- ຮຽນຮູ້ກ່ຽວກັບທາງເລືອກຂອງການເບິ່ງແຍງດູແລແທນອຳຊາຖ້າຫາກว່າທ່ານຕ້ອງການເວລາພັກ.
- ເວົ້າເຣື່ອງບັນຫາທີ່ທ່ານມີຢູ່ໂດຍສະເພາະ ແລະ ສະເນີ ຣາຍຣະອຽດການເຣັດວຽກ ແລະ ຄຳແນະນຳໃນການເບິ່ງແຍງດູແລ

ຕິດຕໍ່ຫາຫ້ອງການ Community Living Connections ຂອງທ້ອງຖິ່ນຂອງທ່ານເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບໂຄງການອັນນີ້ ຫລື ໄປທີ່ www.altsa.dshs.wa.gov/caregiving.

* *ກົດກຳນົດຂອງເງື່ອນໄຂໄດ້ຮັບບາງຢ່າງຈະຖືກໃຊ້ ແລະ ການບໍລິການແຕກຕ່າງກັນໄປແຕ່ລະຂຸມນຸມອິນໄປຫາຂຸມນຸມອິນ*

ປຶ້ມນ້ອຍຄູ່ມືຟຣີ

The Family Caregiver Handbook (DSHS 22-277)

ແມ່ນປຶ້ມນ້ອຍຟຣີທີ່ສາມາດຊ່ວຍທ່ານໃຫ້ຮຽນຮູ້ກ່ຽວກັບທຸກໆເຣື່ອງຂອງການໃຫ້ການເບິ່ງແຍງດູແລ. ຈົ່ງເບິ່ງ ຫນ້າ 16 ເພື່ອຣາຍຣະອຽດສຳລັບການສັ່ງເອົາ ຫລື ອ່ານຢູ່ທາງອິນເຕີແນດ໌ໄດ້ທີ່ https://www.dshs.wa.gov/SESA/publications-library.

ແວບໄຊທ์ຂອງ ALTSA

ແວ່ເຂົ້າຢັ້ຽມແວບໄຊທ์ຂອງ ALTSA ເພື່ອຈະຮຽນຮູ້ເພີ້ມເຕີມກ່ຽວກັບ:

- ຊະນິດຂອງການບໍຣິການເບິ່ງແຍງດູແລຕ່າງໆ, ໂຄງການຕ່າງໆ, ແລະ ແຫລ່ງຊ່ວຍເຫລືອຕ່າງໆທີ່ມີໄວ້ໃຫ້ ແລະ ຈະຂອກຫາໄດ້ແນວໃດ.
- ທາງເລືອກຕ່າງໆເຮືອງບ່ອນຢູ່ອາສັຍຢູ່ຕາມເຮືອນຢູ່ສຳລັບຜູ້ທີ່ບໍ່ສາມາດອາສັຍຢູ່ໃນເຮືອນຕໍ່ໄປອີກແລ້ວ ແລະ ຈະຂອກຫາໄດ້ແນວໃດ.
- ແຫລ່ງບໍຣິການຕ່າງໆຂອງຣັດ, ຣັດຖະບານກາງ ແລະ ທ້ອງຖິ່ນທີ່ຊ່ວຍຈ່າຍຄ່າຂອງການເບິ່ງແຍງດູແລ ແລະ ຄ່າຢາຕ່າງໆທີ່ທ່ານໝໍສັ່ງຊື້.
- ຂໍ້ມູນ, ແຫລ່ງບໍຣິການຕ່າງໆ, ແລະ ໂຄງການອູ້ມຊູຜູ້ເບິ່ງແຍງດູແລສຳລັບບຸກຄົນທີ່ເບິ່ງແຍງດູແລຄົນຮັກ ຂອງເຂົາເຈົ້າ.
- ການວາງແຜນການປິ່ນປົວຣະຍະຍາວ:
  - ຂັ້ນຕອນທາງກົດໝາຍ ແລະ ການເງິນທີ່ຈຳເປັນເພື່ອ ຈະຊ່ວຍເຫລືອວາງແຜນຢ່າງສະຫລຽວສະຫລາດໄວ້ໃນອະນາຄົດ.
  - ຂໍ້ແນະນຳກ່ຽວກັບການແກ່ອາຍຸທີ່ມີສຸຂະພາບແຂງແຮງ.
- ບົດທີ່ໄດ້ແປອອກຂອງປຶ້ມນ້ອຍຫົວນີ້ເປັນພາສາຂະແມນ, ຈີນ, ເກົາຫລີ, ລາວ, ໂຊວຽດ, ສະແປນິສ, ແລະ ວຽດນາມ.

ແວ່ຢັ້ຽມ **https://www.dshs.wa.gov/altsa** ໃນມື້ນີ້!

ເລກໂທຣະສັບທ້ອງຖິ່ນຂອງ Home and Community Services

ໃຫ້ເບິ່ງແຜນທີ່ເພື່ອຈະຊອກຫາເຂດທ້ອງຖິ່ນທີ່ທ່ານອາໄສຢູ່. ໃຫ້ໂທຫາເລກທີ່ຖືກບົ່ງໄວ້ສຳລັບເຂດທ້ອງ
ຖິ່ນຂອງທ່ານ ແລະ ຖາມຫາຫ້ອງການ HCS ທ້ອງຖິ່ນທີ່ໃກ້ບ້ານທ່ານທີ່ສຸດ.



ທ້ອງຖິ່ນ 1

509-323-9400
1-800-459-0421
TTY 509-329-3698

ຄາວຕີ Adams, Asotin, Benton, Chelan, Columbia, Douglas, Ferry, Franklin, Garfield, Grant, Kittitas, Klickitat, Lincoln, Okanogan, Pend Oreille, Spokane, Stevens, Walla Walla, Whitman, EIA Yakima Counties

ທ້ອງຖິ່ນ 2

206-341-7600
1-800-346-9257
TTY 1-800-833-6384

ຄາວຕີ Island, King, San Juan, Skagit, Snohomish, EIA Whatcom

ທ້ອງຖິ່ນ 3

253-476-7200
1-800-442-5129
TTY 253-593-5471

ຄາວຕີ Clallam, Clark, Cowlitz, Grays Harbor, Jefferson, Kitsap, Lewis, Mason, Pacific, Pierce, Skamania, Thurston, EIA Wahkiakum

---

ພວກເຮົາຫມົດທຸກຄົນເປັນເພື່ອນຮ່ວມງານກັນຕໍ່ຕ້ານການກົດຂີ່ຂົ່ມເຫັງຜູ້ໃຫຍ່

ການກົດຂີ່ຂົ່ມເຫັງຜູ້ໃຫຍ່ອ່ອນແອ (ບຸກຄົນຜູ້ທີ່ຕ້ອງການຊ່ວຍທີ່ຈະເບິ່ງແຍງຕົນເອງ) ສາມາດເກີດຂຶ້ນໄດ້ໃນທຸກໆເວລາ, ທຸກສະຖານທີ່. ກົມ DSHS ສືບສວນທຸກໆການກ່າວຫາໃນການກົດຂີ່ຂົ່ມເຫັງ, ການປ່ອຍປະລະເລີຍ, ການສະແວງຫາຜົນປະໂຍດ, ຫລື ການປະຖິ້ມຂອງຜູ້ໃຫຍ່ອ່ອນແອ.

ຖ້າຫາກว່າທ່ານສົງສັຍว່າມີການກົດຂີ່ຂົ່ມເຫັງ, ການປ່ອຍປະລະເລີຍ, ຫລື ການສະແວງຫາຜົນປະໂຍດໃສ່ຜູ້ໃຫຍ່ອ່ອນແອ:

ໂທຫາເລກໂທຟຣີຂອງ DSHS

DSHS TOLL FREE 1-866-ENDHARM
Voice/TTY Accessible
1-866-363-4276

Washington State Department of Social & Health Services
Transforming lives

DSHS 22-619 LA (Rev. 7/15)